

# ຄູ່ມືແນະນຳ ສິດທິ ແລະ ຄວາມເປັນອິດສະຫຼ ະ ໃນຂະບວນການ ການຕັດສິນໃຈ ຂອງປະຊາຊິນບັນດາເຜົ່າ ໆ

OXFAM

ວັນທີພິມ: ມິຖຸນາ 2010
ອັອກສະຟາມ, ອົດສະຕຣາລີ
ຖະໜົນ ເລກເຊັດສະເຕີ 132
ຄາເຕີນ 3053
ວິກໂຕເລຍ
ອົດສະຕຣາລີ
ABN 18055 208 636
ໂທລະສັບ: +61 3 9289 9444
ເວັບໄຊ: www.oxfam.org.au

**ຂຽນໂດຍ:** ຄຣິດສະຕິນນາ ຣິນ, ເຊເຣນາ ລີລີໄວທ໌ ແລະ ໄມເຄີລ ໄຊມອນ
**ກວດແກ້ໂດຍ:** ຕາເລຍ ເອເລີນ ແລະ ມູລິນ ບັດເກດ
**ບັນນາທິການຝ່າຍສິນ:** ໂດມີນິກ ເຜນລາ
**ອອກແບບ:** ປາວລີ ສະມິດ
**ຮັບຜິດຊອບການພິມ:** ເດວິດ ເອດເກຣ
**ຜູ້ພິມ:** ສຳນັກພິມ ແມັກລາເຣນ
**ຜູ້ສະໜັບສະໜູນ:** ເຊວຊີ ຫັດເກດ ແລະ ແຄລ ຣຸດຊິນ

***ທະບຽນພິມ:*** *273/ພຈ 06 07 2012*
***ພິມທີ່:*** *Phaxay Graphic*

**ຄຳສະແດງຄວາມຂອບໃຈ**

ອົງການອັອກສະຟາມຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈອົງການຈັດຕັ້ງຕ່າງໆ ແລະ ສ່ວນບຸກຄົນທີ່ໄດ້ປະກອບສ່ວນໃຫ້ຄຳແນະນຳ ແລະ ທິດທາງທີ່ເປັນປະໂຫຍດໃນການຈັດພິມປຶ້ມເຫຼັ້ມນີ້, ໂດຍສະເພາະຄະນະຮັບຜິດຊອບການຈັດພິມຂໍສະແດງຄວາມຮູ້ບຸນຄຸນຕໍ່ອົງການພັດທະນາປ່າໄມ້ຊຸມຊົນ, ອົງການແມ່ນ້ຳນາໆຊາດ, ສະຖາບັນຊັບພະຍາກອນໂລກ, ອົງການອັອກສະຟາມແຫ່ງປະເທດສະຫະລັດອາເມລິກາ, ອົງການຄັດໂທລິກເພື່ອການພັດທະນາສາກົນ ແລະ ຫ້ອງການຊົນເຜົ່າພື້ນເມືອງປະຈຳພາກພື້ນອາຊີທີ່ໄດ້ປະກອບສ່ວນໃຫ້ຄຳແນະນຳ ແລະ ສະໜອງຂໍ້ມູນສຳຄັນເຂົ້າ. ພ້ອມດຽວກັນນີ້ກໍຂໍສະແດງຄວາມຮູ້ບຸນຄຸນຕໍ່ມູນນິທິພລາເນັດວິນເລີ ທີ່ໃຫ້ການສະໜັບສະໜູນດ້ານທຶນຮອນໃນການຈັດພິມຄັ້ງນີ້.

# ຄຳນຳ

ປະຊາຊົນບັນດາເຜົ່າ ມີສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈໃນການເຫັນດີເຫັນພ້ອມ ຫຼືວ່າ ຄັດຄ້ານຕໍ່ກິດຈະກຳ ຫຼື ໂຄງການຕ່າງໆທີ່ອາດມີຜົນກະທົບຕໍ່ພື້ນທີ່ທຳມາຫາກິນ, ດິນແດນ ແລະ ຊັບພະຍາກອນທຳມະຊາດຂອງພວກເຂົາເຈົ້າເຊິ່ງໄດ້ຖືກຮັບຮອງໄວ້ຢູ່ໃນຖະແຫຼງການຂອງອົງການສະຫະປະຊາຊາດວ່າດ້ວຍສິດທິຂອງຊົນເຜົ່າພື້ນເມືອງ

(http://www.un.org/esa/socdev/unpfii/en/declaration.html)

ຫຼັກການສຳຄັນສະບັບນີ້ແມ່ນສາມາດນຳໃຊ້ເປັນຄູ່ມືສຳລັບຊຸມຊົນທີ່ອາດຈະໄດ້ຮັບຜົນກະທົບຈາກໂຄງການຕໍ່ພື້ນທີ່ທຳມາຫາກິນຫຼືວ່າການນຳໃຊ້ຊັບພະຍາກອນທຳມະຊາດຂອງພວກເຂົາເຈົ້າ. ການສົນທະນາໃຫ້ຄຳປຶກສາ ແລະ ເຈລະຈາຕໍ່ລອງ ຄວນຈະເກີດຂື້ນຢູ່ພາຍໃຕ້ເງື່ອນໄຂທີ່ຊຸມຊົນຈະບໍ່ຖືກບັງຄັບຫຼືກົດດັນໃນການເຂົ້າຮ່ວມ,ກ່ອນຂະບວນການຕັດສິນໃຈຈະເກີດຂື້ນ ແລະ ການຕັດສິນໃຈ ດັ່ງກ່າວນັ້ນຄວນຈະເກີດຂື້ນໃນເມື່ອຊຸມຊົນມີຂໍ້ມູນຂ່າວສານທີ່ຄົບຖ້ວນກ່ຽວກັບບັນຫາທີ່ຍົກຂື້ນມາສົນທະນາ ແລະ ເຈລະຈາຕໍ່ລອງໃນຂັ້ນຊຸມຊົນ.

ເພື່ອຮັບປະກັນໄດ້ວ່າຄູ່ມືນີ້ແມ່ນນຳໃຊ້ໄດ້ຢ່າງກວ້າງຂວາງຢູ່ໃນ ສປປ ລາວ ຄຳວ່າ "ປະຊາຊົນບັນດາເຜົ່າ" ແມ່ນໄດ້ຖືກນຳມາໃຊ້ແທນຄຳວ່າ "ປະຊາຊົນຄົນພື້ນເມືອງ"

## ຈຸດປະສົງໃນການພິມປື້ມຄູ່ມືແນະນໍາກ່ຽວກັບສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່າ

ຈຸດປະສົງຂອງປື້ມຄູ່ມືສະບັບນີ້ແມ່ນເພື່ອໃຫ້ຄໍາແນະນໍາກ່ຽວກັບສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່າໂດຍໄດ້ສະໜອງຂໍ້ມູນພື້ນຖານສໍາຄັນກ່ຽວກັບສິດທິຂອງຊຸມຊົນໃນຂະບວນການຕັດສິນໃຈຢ່າງເປັນອິດສະຫຼະທີ່ຈະໃຫ້ຄວາມເຫັນດີເຫັນພ້ອມ ຫຼື ຢັບຢັ້ງການປະຕິບັດໂຄງການໃດໜຶ່ງໃນເຂດຊຸມຊົນຂອງຕົນ ແລະ ຊີ້ໃຫ້ເຫັນວ່າສິດທິດັ່ງກ່າວນີ້ສາມາດຊ່ວຍໃຫ້ປະຊາຊົນປະກອບຄໍາຄິດເຫັນຂອງຕົນກ່ຽວກັບການພັດທະນາໂຄງການຕ່າງໆແນວໃດແດ່, ເຊັ່ນວ່າການສ້າງເຂື່ອນໄຟຟ້ານໍ້າຕົກ, ການຂຸດຄົ້ນບໍ່ແຮ່, ການຂຸດຄົ້ນໄມ້ ແລະ ໂຄງການກໍ່ສ້າງພື້ນຖານໂຄງລ່າງຂະໜາດໃຫຍ່ຕ່າງໆເຊິ່ງອາດມີຜົນກະທົບຕໍ່ພວກເຂົາເຈົ້າໃນດ້ານຕ່າງໆ.

ພວກເຮົາທຸກຄົນລ້ວນແຕ່ມີສິດໃນການຕັດສິນໃຈໃນບັນຫາຕ່າງໆທີ່ຈະເກີດຂຶ້ນຕໍ່ທີ່ດິນຂອງພວກເຮົາ. ຫຼັກການນີ້ໄດ້ຮັບການປົກປ້ອງໂດຍກົດໝາຍສາກົນວ່າດ້ວຍສິດທິມະນຸດເຊິ່ງກົດໝາຍດັ່ງກ່າວນີ້ໄດ້ລະບຸໄວ້ວ່າ “ມະນຸດທຸກຄົນລ້ວນແຕ່ມີສິດຕັດສິນໃຈດ້ວຍຕົນເອງ” ແລະ ສິ່ງທີ່ສອດຄ່ອງກັບສິດໃນການຕັດສິນໃຈດ້ວຍຕົນເອງນີ້ກໍ່ຄື “ມະນຸດທຸກຄົນມີສິດໃນການດໍາເນີນການກໍ່ສ້າງເສດຖະກິດ, ສັງຄົມ ແລະ ວັດທະນະທໍາຂອງຕົນເອງຢ່າງມີອິດສະຫຼະເຕັມສ່ວນ” ການສ້າງຄູ່ມືນີ້ຂື້ນມາແມ່ນເພື່ອຊ່ວຍອົງການຈັດຕັ້ງຕ່າງໆທີ່ເຮັດໜ້າທີ່ຊ່ວຍເຫຼືອຊຸມຊົນທີ່ໄດ້ຮັບຜົນກະທົບຈາກບັນດາໂຄງການພັດທະນາຂະໜາດໃຫຍ່. ມັນແມ່ນເຄື່ອງມືດ້ານພາກປະຕິບັດ ເພື່ອອໍານວຍຄວາມສະດວກໃນການສົນທະນາລະຫວ່າງຊຸມຊົນກັບເຈົ້າຂອງໂຄງການພັດທະນາຕ່າງໆລວມທັງບັນດາບໍລິສັດ, ພາກລັດຖະບານ ແລະ ຫົວໜ່ວຍການເງິນຕ່າງໆ.

ຄູ່ມືແນະນໍາສະບັບນີ້ ປະກອບດ້ວຍ 7 ບາດກ້າວແຜນງານໃຫຍ່ ທີ່ມີເປົ້າໝາຍເພື່ອຊ່ວຍເຫຼືອປະຊາຊົນບັນດາເຜົ່າທີ່ໄດ້ຮັບຜົນກະທົບຈາກໂຄງການຕ່າງໆໃນການທວງຄືນສິດທິຂອງຕົນໃນຄວາມເປັນອິດສະຫຼະໃນການຕັດສິນໃຈໃຫ້ຄວາມເຫັນພ້ອມ ຫຼື ຢັບຢັ້ງການປະຕິບັດໂຄງການໃນເຂດພື້ນທີ່ຂອງຕົນ. ນອກຈາກນັ້ນ, ຄູ່ມືສະບັບນີ້ຍັງໄດ້ສະແດງໃຫ້ເຫັນບັນດາຫຼັກການໂດຍສັງເຂບທີ່ມີລັກສະນະຄ້າຍຄືກັນໃນເວລານໍາໄປໃຊ້ກັບຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ. ຄູ່ມືປະກອບດ້ວຍຫຼາຍຕອນທີ່ເປັນແຫຼ່ງຂໍ້ມູນທີ່ມີປະໂຫຍດເພື່ອຊ່ວຍໃຫ້ຊຸມຊົນໄດ້ເຂົ້າໃຈເຖິງສິດທິຂອງເຂົາເຈົ້າຢ່າງຖືກຕ້ອງ. ນອກຈາກນີ້, ຄູ່ມືຍັງປະກອບດ້ວຍຄໍາສັບ ຫຼື ສໍານວນຄໍາເວົ້າສໍາຄັນທີ່ເອີ້ນກັນວ່າ “ສັນຍານເຕືອນໄພ” ທີ່ຊີ້ໃຫ້ເຫັນວ່າອັນໃດເປັນສິ່ງທີ່ຈະຜິດພາດ ແລະ ອັນໃດຈະເປັນຄວາມຫຍຸ້ງຍາກທີ່ອາດເປັນສາເຫດໃຫ້ຊຸມຊົນຂັດແຍ່ງກັນ.

## ຄໍາແນະນໍາກ່ຽວກັບສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່າ.

ປະຊາຊົນບັນດາເຜົ່າໄດ້ດໍາເນີນການຕໍ່ສູ້ເພື່ອໃຫ້ລັດຖະບານຂອງພວກເຂົາເຈົ້າກໍ່ຄືອົງການຈັດຕັ້ງສາກົນ,ບໍລິສັດຕ່າງໆຍອມຮັບສິດທິຂອງຕົນໃນການທີ່ຈະອະນຸຍາດ ຫຼື ຢັບຢັ້ງການພັດທະນາໂຄງການຕ່າງໆ. ສິດທິຂອງເຂົາເຈົ້າທີ່ວ່ານີ້ມີຄວາມກ່ຽວຂ້ອງໂດຍກົງກັບສິດທິຂອງປະຊາຊົນບັນດາເຜົ່າໃນການຄຸ້ມຄອງອະນາຄົດຂອງຕົນເອງ ແລະ ອະນາຄົດຂອງປະຊາຊົນຂອງເຂົາເຈົ້າ. ສິດທິຂອງປະຊາຊົນດັ່ງກ່າວນີ້ໄດ້ຖືກກໍານົດໃຫ້ເປັນສິດໃນຂະບວນການຕັດສິນໃຈຂອງຕົນຢ່າງເປັນອິດສະຫຼະ “ໃນການທີ່ຈະອະນຸຍາດໃຫ້ ຫຼື ຢັບຢັ້ງການກະທໍາຕ່າງໆທີ່ອາດເປັນຜົນກະທົບຕໍ່ເຂດພື້ນທີ່, ດິນແດນຂອງຕົນ ແລະ ຊັບພະຍາກອນທໍາມະຊາດ”.

**ສິ່ງທີ່ກ່າວມານີ້ກໍ່ຄືການສະຫຼຸບໂດຍສັງເຂບກ່ຽວກັບສິດທິ, ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່າ.**

ສິດທິຂອງຊຸມຊົນໃນດ້ານນີ້ມັກຈະຖືກລະເມີດຢູ່ເລື້ອຍໆ ເມື່ອມີການດໍາເນີນໂຄງການຂະໜາດໃຫຍ່ເຊັ່ນ: ໂຄງການຂຸດຄົ້ນບໍ່ແຮ່, ການສ້າງເຂື່ອນໄຟຟ້ານໍ້າຕົກ, ການສ້າງທາງຫຼວງ, ການປູກ ຫຼື ການຂຸດຄົ້ນໄມ້ເປັນຕົ້ນ. ເມື່ອໃດທີ່ມີການດໍາເນີນໂຄງການເຫຼົ່ານີ້ຜູ້ດໍາເນີນໂຄງການມັກຈະກີດກັ້ນປະຊາຊົນບັນດາເຜົ່າບໍ່ໃຫ້ເຂົ້າມາມີສ່ວນຮ່ວມໃນການສ້າງແຜນການ ແລະ ການຕັດສິນໂຄງການ. ຜົນສະທ້ອນຈາກພຶດຕິກໍາຂອງຜູ້ປະຕິບັດໂຄງການແບບນີ້ ມັກຈະນໍາເອົາຄວາມເສຍຫາຍມາໃຫ້ແກ່ຊຸມຊົນເລື້ອຍໆ. ປະຊາຊົນບັນດາເຜົ່າ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການສ່ຽງຕໍ່ການສູນເສຍວິຖີການທໍາມາຫາກິນ ແລະ ວັດທະນະທໍາຂອງພວກເຂົາເຈົ້າຢ່າງບໍ່ມີວັນຈະກອບກູ້ຄືນມາໄດ້. ດິນອາດຖືກທໍາລາຍ ຫຼື ຖືກຍຶດຄອງໂດຍປາສະຈາກຄວາມເຫັນດີເຫັນພ້ອມຈາກຜູ້ເປັນເຈົ້າຂອງດິນ. ເມື່ອມີການຍົກຍ້າຍປະຊາຊົນໃຫ້ໄປຕັ້ງຖິ່ນຖານບ້ານເຮືອນຢູ່ບ່ອນໃໝ່ຊຸມຊົນມັກຈະຖືກບີບບັງຄັບໃຫ້ຮັບເອົາເງິນຊົດເຊີຍການຕັ້ງຖິ່ນຖານໃໝ່ທີ່ມີມູນຄ່າໜ້ອຍກວ່າມູນຄ່າຖິ່ນຖານເດີມຂອງພວກເຂົາເຈົ້າເລື້ອຍໆ, ເຊິ່ງສິ່ງນີ້ບໍ່ຄວນຈະເກີດຂຶ້ນກັບຊຸມຊົນ. ໄລຍະຜ່ານມາ, ອົງການກົດໝາຍສາກົນໄດ້ອອກກົດໝາຍ ແລະ ອົງການສະຫະປະຊາຊາດກໍ່ໄດ້ອອກຖະແຫຼງການກ່ຽວກັບສິດທິຂອງປະຊາຊົນບັນດາເຜົ່າເພື່ອໃຫ້ການປົກປ້ອງສິດຜົນປະໂຫຍດຂອງປະຊາຊົນບັນດາເຜົ່າຈາກການລະເມີດສິດທິຂອງເຂົາເຈົ້າດັ່ງກ່າວນັ້ນ. ພ້ອມດຽວກັນນັ້ນກໍ່ໄດ້ມີການປ້ອງກັນຄວາມປອດໄພໃຫ້ກັບຊຸມຊົນທີ່ໄດ້ຮັບຜົນສະທ້ອນຈາກໂຄງການໃນດ້ານຕ່າງໆນໍາອີກ. ປະຊາຊົນບັນດາເຜົ່າມີສິດເຂົ້າຮ່ວມໃນການຕັດສິນໃຈ ໃນວຽກງານຕ່າງໆທີ່ອາດມີຜົນກະທົບຕໍ່ທີ່ດິນ, ຊັບພະຍາກອນ ຫຼື ດິນແດນຂອງເຂົາເຈົ້າ. ປະຊາຊົນບັນດາເຜົ່າມີສິດຕັດສິນໃຈຢ່າງມີອິດສະຫຼະ ໃນການທີ່ຈະອະນຸຍາດ ຫຼື ຢັບຢັ້ງການດໍາເນີນໂຄງການໃນເຂດດິນຂອງຕົນ. ພ້ອມດຽວກັນນັ້ນ, ເຂົາເຈົ້າມີສິດທີ່ຈະເຂົ້າຮ່ວມໃນການຕັດສິນໃຈລວມໝູ່ໂດຍຜ່ານຂະບວນການກໍານົດແລະການຕັດສິນໃຈດ້ວຍຕົນເອງຢ່າງເປັນອິດສະຫຼະ.

ສໍາລັບປະຊາຊົນຊົນທີ່ບໍ່ແມ່ນຄົນຊົນເຜົ່າທີ່ໄດ້ຮັບຜົນກະທົບຈາກໂຄງການນັ້ນກໍຄວນຈະໄດ້ຮັບການສະໜັບສະໜູນໃຫ້ເຂົ້າຮ່ວມການເຈລະຈາ ແລະ ການວາງແຜນໂຄງການຢ່າງເຕັມສ່ວນ ແລະ ມີປະສິດທິຜົນ.




ການຊອກຫາບຸກຄົນຜູ້ທີ່ກຳລັງສ້າງແຜນໂຄງການ




ການຂໍເອົາຂໍ້ມູນຂ່າວສານຈາກຜູ້ສ້າງໂຄງການ




ການດຳເນີນການສົນທະນາພາຍໃນຊຸມຊົນ




ການສົນທະນາຂອງຊຸມຊົນກັບຜູ້ສ້າງໂຄງການ




ການສະແຫວງຫາຄຳແນະນຳຢ່າງເປັນເອກະລາດ




ການຕັດສິນໃຈໃນຂັ້ນຊຸມຊົນ




ການດຳເນີນການພົວພັນກັບຜູ້ສ້າງໂຄງການ

## ບັນຫາສິ່ງທ້າທາຍ

ການອ້າງ ຫຼື ທວງສິດທິໃນຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່າ ແມ່ນວຽກງານໜຶ່ງທີ່ມີຄວາມທ້າທາຍ ຂະບວນການດຳເນີນການເຈລະຈາເພື່ອໃຫ້ໄດ້ມາເຊິ່ງສິດທິ, ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈນັ້ນຈະໃຊ້ເວລາຫຼາຍປີຈຶ່ງຈະສຳເລັດ ຊຸມຊົນທີ່ໄດ້ຮັບຜົນສະທ້ອນຈາກໂຄງການອາດຕ້ອງການການມີສ່ວນຮ່ວມຂອງພວກເຂົາເຈົ້າໃນການເຈລະຈາບັນຫາຕ່າງໆ ຫຼື ໃນກໍລະນີຊຸມຊົນບັນດາຊົນເຜົ່າໃດໜຶ່ງນັ້ນກໍຍິ່ງມີຄວາມຕ້ອງການການເຄົາລົບຕໍ່ສິດທິໃນຄວາມເປັນອິດສະຫຼະ, ຄວາມພ້ອມ ແລະ ຄວາມເຫັນດີເຫັນພ້ອມຂອງເຂົາເຈົ້າ. ແຕ່ວ່າໃນຄວາມເປັນຈິງແລ້ວຈະເຫັນວ່າຄົນບໍ່ຮັບຮູ້ສິດທິເຫຼົ່ານີ້ໂດຍປະລິຍາຍເລື້ອຍໆ. ເຖິງຢ່າງໃດກໍ່ຕາມ, ລັດຖະບານຂອງບາງປະເທດ, ບາງອົງການຈັດຕັ້ງ ແລະ ອົງການການເງິນຈຳນວນໜຶ່ງກໍ່ໃຫ້ຄວາມເຄົາລົບນັບຖືຕໍ່ສິດທິດັ່ງກ່າວນີ້ຂອງຊຸມຊົນໄດ້ໃນລະດັບດີສົມຄວນ, ພ້ອມດຽວກັນນັ້ນກໍ່ໄດ້ມີນະໂຍບາຍ ແລະ ໃຫ້ຄຳໝັ້ນສັນຍາວ່າຈະໃຫ້ຄວາມເຄົາລົບນັບຖືສິດທິໃນຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນ ໃນເວລາກໍ່ສ້າງໂຄງການຕ່າງໆ. ໃນຂະນະດຽວກັນນັ້ນ ກໍ່ຍັງມີນັກພັດທະນາຈຳນວນຫຼາຍຄົນທີ່ຍັງບໍ່ທັນໃຫ້ຄວາມເຄົາລົບນັບຖື, ປະຕິບັດ ຫຼື ເຂົ້າໃຈຕໍ່ສິດທິໃນຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນຢ່າງເຕັມເມັດເຕັມໜ່ວຍ.

ຍິ່ງໄປກວ່ານັ້ນກໍ່ອາດມີກົດໝາຍດ້ານຕ່າງໆຂອງບາງປະເທດໄດ້ປັບປ່ຽນວິທີການໃນການອ້າງສິດທິໃນການຕັດສິນໃຈຢ່າງເປັນອິດສະຫຼະຂອງປະຊາຊົນ. ຍ້ອນແນວນັ້ນຈຶ່ງຄວນໃຫ້ຄຳແນະນຳແກ່ຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການໄດ້ຮັບຮູ້ເຂົ້າໃຈກ່ຽວກັບລະບຽບກົດໝາຍທ້ອງຖິ່ນຂອງປະເທດເຂົາເຈົ້າເອງ.

## ແມ່ນໃຜເປັນຜູ້ມີສິດໃນການຕັດສິນໃຈຢ່າງເປັນອິດສະຫຼະ?

ສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່າໃນການອະນຸຍາດ ຫຼື ຢັບຢັ້ງໃນບັນຫາໃດໜຶ່ງນັ້ນແມ່ນສິດສະເພາະຂອງປະຊາຊົນບັນດາເຜົ່າທີ່ໄດ້ຮັບຮອງເອົາຢູ່ໃນຖະແຫຼງການຂອງອົງການສະຫະປະຊາຊາດວ່າດ້ວຍສິດທິຂອງປະຊາຊົນບັນດາເຜົ່າ(UNDRIP).

ອົງການອັອກຟາມແຫ່ງປະເທດອົດສະຕຼາລີຢຶດໝັ້ນໃນທັດສະນະທີ່ວ່າທຸກຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ ລ້ວນແຕ່ມີສິດປຶກສາຫາລື ແລະ ເຈລະຈາໃນບັນຫາທີ່ມີຜົນກະທົບຕໍ່ເຂົາເຈົ້າ. ປະຊາຊົນທີ່ບໍ່ແມ່ນຄົນຊົນເຜົ່າທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ມີສິດໃນການປຶກສາຫາລື ແລະ ເຈລະຈາໃນຂະບວນການຕັດສິນໃຈເຖິງວິທີການຕ່າງໆທີ່ສອດຄ່ອງກັບຫຼັກການດ້ານສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນຂອງປະຊາຊົນບັນດາເຜົ່າໃນການທີ່ຈະອະນຸຍາດ ຫຼື ຢັບຢັ້ງເໝືອນກັນ.

ສະນັ້ນ, ຈຸດປະສົງຂອງຄູ່ມືສະບັບນີ້ກໍ່ແມ່ນເພື່ອໃຫ້ຊຸມຊົນທັງໝົດບໍ່ວ່າຈະເປັນຊຸມຊົນຄົນຊົນເຜົ່າ ແລະ ບໍ່ແມ່ນຄົນຊົນເຜົ່າທີ່ໄດ້ຮັບຜົນກະທົບຈາກໂຄງການກໍ່ລ້ວນແລ້ວແຕ່ໄດ້ຮັບການປົກປ້ອງດ້ວຍສິດທິທາງກົດໝາຍເຊັ່ນດຽວກັນ. ບົນພື້ນຖານຂອງຄວາມເຂົ້າໃຈທີ່ວ່າສິດທິຂອງຊຸມຊົນທັງໝົດນັ້ນບໍ່ອາດສາມາດນຳມາພິຈາລະນາຄືກັນກັບສິດທິຂອງປະຊາຊົນບັນດາເຜົ່າໃນດ້ານການໃຫ້ ຫຼື ບໍ່ໃຫ້ອະນຸຍາດ. ເຖິງຢ່າງໃດກໍຕາມ, ທຸກຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການຈະຕ້ອງສາມາດເຂົ້າຮ່ວມໃນການເຈລະຈາ ແລະ ການຕັດສິນບັນຫາຢ່າງມີປະສິດທິຜົນ ແລະ ເມື່ອໃດທີ່ຊຸມຊົນທີ່ບໍ່ແມ່ນຄົນຊົນເຜົ່າຫາກກ່າວປະຕິເສດວ່າ "ບໍ່ເຫັນດີ" ກັບໂຄງການໂຄງການນັ້ນກໍຄວນພິຈາລະນາຂໍ້ສະເໜີຂອງເຂົາເຈົ້າຄືກັນ.

# ສາລະບານ

ຄຳນຳ 1

ການອະທິບາຍຄຳສັບ 6

ການກຳນົດພື້ນທີ່ໂຄງການ 8

ຄວາມເຂົ້າໃຈກ່ຽວກັບສິດທິ, ຄວາມເປັນອິດສະຫຼະໃນຂະບວນການການຕັດສິນໃຈ 9

ສິດທິ, ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່າມາຈາກໃສ່?
ສິດທິອັນນີ້ມີໄວ້ສຳລັບຜູ້ໃດ? 10

ບາດກ້າວຕ່າງໆທາງພາກປະຕິບັດ 11

ປະຊາຊົນສາມາດໄດ້ຮັບການສະໜັບສະໜູນ ແລະ ຂໍ້ມູນເພີ້ມຕື່ມຈາກໃສແດ່? ມີອົງການ
ຈັດຕັ້ງໃດແດ່ອີກທີ່ກຳລັງປະຕິບັດໜ້າທີ່ກ່ຽວກັບຊັບພະຍາກອນທຳມະຊາດຢູ່ໃນຂະນະນີ້ 28

ເອກະສານຊ້ອນທ້າຍ 1: ບັນດາປະເທດທີ່ໃຫ້ການສະໜັບສະໜູນຖະແຫຼງການອົງການ
ສະຫະປະຊາຊາດວ່າດ້ວຍສິດທິຂອງປະຊາຊົນບັນດາເຜົ່າ (UNDRIP) 30

ເອກະສານຊ້ອນທ້າຍ 2: ຂອບແຜນວານສຳລັບການວິໄຈກົດໝາຍຂັ້ນທ້ອງຖິ່ນກ່ຽວກັບ
ອິດສະຫຼະ, ຄວາມພ້ອມ ແລະ ຄວາມເຫັນດີເຫັນພ້ອມ 31

ເອກະສານຊ້ອນທ້າຍ 3: ວົງຈອນຂອງໂຄງການ 32

**ຜົນປະໂຫຍດ:** ຜົນດີບາງຢ່າງທີ່ເກີດຈາກໂຄງການສຳລັບຊຸມຊົນຂອງທ່ານ. ຜົນປະໂຫຍດນັ້ນອາດຈະເກີດຂຶ້ນໂດຍຜ່ານຂະບວນການເຈລະຈາລະຫວ່າງຊຸມຊົນກັບຜູ້ສ້າງໂຄງການ ຫຼື ລັດຖະບານ.

**ການແບ່ງປັນຜົນປະໂຫຍດ:** ແມ່ນວິທີການເພື່ອຮັບປະກັນການແບ່ງຜົນປະໂຫຍດຂອງໂຄງການໃຫ້ມີຄວາມຍຸດຕິທຳລະຫວ່າງຊຸມຊົນທີ່ໄດ້ຮັບຜົນກະທົບດ້ວຍກັນ.

**ຄວາມເຫັນດີເຫັນພ້ອມ:** ການອະນຸມັດ ຫຼື ການປະຕິເສດຂອງທ່ານແກ່ຜູ້ສ້າງໂຄງການໃຫ້ດຳເນີນໂຄງການ.

**ການປຶກສາຫາລື:** ການແລກປ່ຽນຂໍ້ມູນຂ່າວສານ ແລະ ການສົນທະນາກ່ຽວກັບແຜນການຂອງໂຄງການລະຫວ່າງຊຸມຊົນກັບຜູ້ສ້າງໂຄງການ. ການປຶກສາຫາລືມີຄວາມແຕກຕ່າງຈາກຄວາມເຫັນດີເຫັນພ້ອມ ຫຼື ການປະຕິເສດ.

**ສິດລວມໝູ່:** ສິດຂອງຄົນກຸ່ມໜຶ່ງ ເຊັ່ນ: ຊຸມຊົນໜຶ່ງສິດອັນນີ້ບໍ່ແມ່ນສິດຂອງສ່ວນບຸກຄົນໃດບຸກຄົນໜຶ່ງ.

**ຖະແຫຼງການ:** ໃນລະບົບຂອງອົງການສະຫະປະຊາຊາດ (ສປຊ) ນັ້ນ, ມະຕິກ່ຽວກັບບັນຫາໃດໜຶ່ງຂອງປະເທດຕ່າງໆໃນໂລກໄດ້ຕົກລົງຮ່ວມກັນເອີ້ນວ່າ: ຖະແຫຼງການ. ຖະແຫຼງການດັ່ງກ່າວນີ້ ບໍ່ໄດ້ມີຂໍ້ຜູກພັນທາງດ້ານກົດໝາຍ ພຽງແຕ່ເປັນການກຳນົດຫຼັກການເຊິ່ງລັດຖະບານຂອງປະເທດຕ່າງໆທີ່ເປັນສະມາຊິກຂອງອົງການສະຫະປະຊາຊາດໄດ້ຮ່ວມກັນຕົກລົງຮັບຮອງເອົາເພື່ອຈຸດປະສົງໃນການປະຕິບັດວຽກງານໃຫ້ປະສົບຜົນສຳເລັດໃນອະນາຄົດ. ຖະແຫຼງການນີ້ສາມາດກາຍເປັນຂໍ້ຜູກພັນທາງກົດໝາຍໄດ້ຖ້າຫາກບັນຍັດໄວ້ໃນກົດໝາຍແຫ່ງຊາດ.

**ຂະບວນການຕັດສິນໃຈ:** ວິທີການທີ່ຊຸມຊົນຂອງເຮົາໄດ້ເລືອກເອົາເພື່ອຕັດສິນໃຈວ່າຈະອະນຸຍາດໃຫ້ ຫຼື ຢັບຢັ້ງສະຖານທີ່ຂອງໂຄງການ.

**ການຍົກຍ້າຍປະຊາຊົນ:** ການສູນເສຍບ້ານເຮືອນ ແລະ ທີ່ດິນຂອງປະຊາຊົນ

**ການເຂົ້າບຽດຍຶດສະຖານທີ່ທາງດ້ານເສດຖະກິດ**: ການສູນເສຍແຫຼ່ງລາຍໄດ້ ແລະ ແຫຼ່ງທຳມາຫາກິນຍ້ອນການສູນເສຍທີ່ດິນ.

# ການອະທິບາຍຄຳສັບ

**ການຍຶດຄອງໂດຍອຳນາດ:** ຄວາມເປັນເຈົ້າໃນການເຈລະຈາຕໍ່ລອງ ເພື່ອໃຫ້ໄດ້ມາເຊິ່ງຜົນປະໂຫຍດຈາກເຈົ້າຂອງໂຄງການຂອງກຸ່ມອິດທິພົນ ຫຼື ບຸກຄົນທີ່ມີອຳນາດເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດສ່ວນຕົວຫຼາຍກວ່າຜົນປະໂຫຍດສ່ວນລວມຂອງໝົດຊຸມຊົນ.

**ການປະເມີນຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ:** ການສຶກສາກ່ອນການເລີ່ມລົງມືປະຕິບັດໂຄງການເພື່ອໃຫ້ຮູ້ວ່າໂຄງການຈະມີຜົນກະທົບແນວໃດ. ຈຸດປະສົງຂອງການປະເມີນນີ້ແມ່ນເພື່ອຈຳກັດຜົນກະທົບທາງລົບຕໍ່ປະຊາຊົນ ແລະ ສິ່ງແວດລ້ອມຂອງເຂົາເຈົ້າ.

**ຜົນກະທົບ:** ຜົນຂອງການປະຕິບັດໂຄງການຂະໜາດໃຫຍ່ທີ່ກະທົບຕໍ່ຊຸມຊົນໃນທາງລົບ. ຕົວຢ່າງ: ມົນລະພິດຕໍ່ແມ່ນ້ຳ, ການສູນເສຍປ່າໄມ້, ການຍົກຍ້າຍບ້ານ. ມັນແມ່ນການໃຊ້ຈ່າຍຂອງໂຄງການທີ່ຕົກເປັນພາລະຂອງປະຊາຊົນແທນທີ່ວ່າຈະແມ່ນພາລະຂອງເຈົ້າຂອງໂຄງການ.

**ຂໍ້ຕົກລົງດ້ານຜົນປະໂຫຍດຈາກຜົນກະທົບ:** ຂໍ້ຕົກລົງດ້ານກົດໝາຍລະຫວ່າງຊຸມຊົນ ແລະ ເຈົ້າຂອງໂຄງການທີ່ກຳນົດບັນດາເງື່ອນໄຂທີ່ເຈົ້າຂອງໂຄງການຕ້ອງຮັບຜິດຊອບ.
**ກົດໝາຍສາກົນ:** ກົດໝາຍທີ່ໃຊ້ຮ່ວມກັນລະຫວ່າງຊາດ.ໃນຂົງເຂດສິດທິມະນຸດ. ກົດໝາຍສາກົນອາດສາມາດນຳໃຊ້ກວມໄປເຖິງວິທີການທີ່ ລັດຖະບານຂອງປະເທດຕ່າງໆປະຕິບັດຕໍ່ສ່ວນບຸກຄົນ ຫຼື ຕໍ່ຊຸມຊົນກໍ່ໄດ້.

**ຊັບພະຍາກອນທຳມະຊາດ:** ສຳລັບເຈົ້າຂອງໂຄງການ ມັນແມ່ນແຫຼ່ງວັດຖຸດິບສຳຄັນທີ່ພົວພັນເຖິງສິ່ງແວດລ້ອມເຊິ່ງສາມາດນຳໄປສ້າງລາຍຮັບທາງດ້ານເສດຖະກິດ, ເຊັ່ນ: ປ່າໄມ້, ນ້ຳມັນ ແລະ ນ້ຳເປັນຕົ້ນ. ສຳລັບຊຸມຊົນແລ້ວ, ມັນແມ່ນແຫຼ່ງທຳມາຫາກິນ, ເຊັ່ນ: ນ້ຳສຳລັບດື່ມ, ທີ່ດິນປູກຝັງ ແລະ ລ້ຽງສັດ.

**ການເຈລະຈາ:** ການສົນທະນາໃນເລື່ອງຕ່າງໆ ເພື່ອໃຫ້ໄດ້ຂໍ້ຕົກລົງທີ່ມີຄວາມຍຸຕິທຳ. ໂດຍທົ່ວໄປແລ້ວກໍ່ແມ່ນການເຈລະຈາລະຫວ່າງເຈົ້າຂອງໂຄງການກັບຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການນັ້ນໆ. ການເຈລະຈານີ້ຈະຄວນໃຫ້ມີສິດອຳນາດເທົ່າທຽມກັນ. ຖ້າຫາກເຈລະຈາຍັງບໍ່ທັນສຳເລັດກໍ່ບໍ່ຄວນຈະດຳເນີນໂຄງການ.

**ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ (NGO):** ອົງການຈັດຕັ້ງທີ່ມີຄວາມເປັນເອກະລາດຈາກລັດຖະບານ. ຮູບແບບຂອງອົງການຈັດຕັ້ງນີ້ບໍ່ແມ່ນບໍລິສັດ. ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ນີ້ອາດລວມເອົາທັງອົງການຈັດຕັ້ງການກຸສົນ ຫຼື ອົງການສາດສະໜາເຊັ່ນ: ວັດ ຫຼື ໂບດ ແລະ ອົງການຈັດຕັ້ງທາງສັງຄົມຝ່າຍພົນລະເຮືອນ, ອົງການຈັດຕັ້ງຊຸມຊົນເປັນຕົ້ນ.

**ເຈົ້າຂອງໂຄງການ:** ທະນາຄານ, ບໍລິສັດ ຫຼື ລັດຖະບານທີ່ຕ້ອງການສ້າງໂຄງການ. ໂດຍສ່ວນໃຫຍ່ແລ້ວໃນການສ້າງໂຄງການໜຶ່ງມັກຈະມີຫຼາຍສ່ວນຮ່ວມກັນ.

**ການຕັ້ງຖິ່ນຖານໃໝ່:** ການຖືກຍົກຍ້າຍໄປອາໃສ ແລະ ດຳລົງຊີວິດຢູ່ສະຖານທີ່ບ່ອນໃໝ່ເພື່ອເອົາຖິ່ນຖານເດີມໃຫ້ເປັນບ່ອນດຳເນີນໂຄງການ. ບາງຄັ້ງກໍ່ແມ່ນລັດຖະບານເອງໃນນາມເຈົ້າຂອງໂຄງການເປັນຜູ້ຈັດຕັ້ງຄຸ້ມຄອງການຕັ້ງຖິ່ນຖານໃໝ່ໃຫ້ແກ່ປະຊາຊົນ.

**ຄວາມສ່ຽງ:** ໂອກາດທີ່ຈະໄດ້ຮັບບາດເຈັບ, ສູນເສຍ ຫຼື ອັນຕະລາຍ. ຄວາມສ່ຽງອາດເກີດຂຶ້ນກັບບຸກຄົນ ຫຼື ທັງໝົດຊຸມຊົນກໍ່ເປັນໄດ້. ເຈົ້າຂອງໂຄງການກໍ່ຜະເຊີນກັບຄວາມສ່ຽງເໝືອນກັນ, ຕົວຢ່າງ: ຄວາມສ່ຽງຕໍ່ການເສື່ອມເສຍຊື່ສຽງຂອງຕົນ ຖ້າເຈົ້າຂອງໂຄງການຫາກມີການທະເລາະວິວາດ ຫຼື ມີຂໍ້ຂັດແຍ່ງກັບຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ.

# ການກຳນົດພື້ນທີ່ໂຄງການ:
# ເປັນຫຍັງຈຶ່ງເລືອກເອົາສະຖານທີ່ນີ້ ແລະ ໃນເວລານີ້?

ພື້ນຖານໂຄງລ່າງຂະໜາດໃຫຍ່ ແລະ ບັນດາໂຄງການອຸດສາຫະກຳຂຸດຄົ້ນຢູ່ໃນຂອບເຂດທົ່ວໂລກກຳລັງໄດ້ຮັບການກໍ່ສ້າງ ແລະ ພັດທະນາໄປໃນຈັງຫວະກ້າວກະໂດດຂັ້ນ. ໂຄງການເຫຼົ່ານີ້ກຳລັງໄດ້ຮັບການປະຕິບັດໃນທ່ວງທ່າທີ່ມີຄວາມຕ້ອງການຊັບພະຍາກອນທຳມະຊາດທີ່ນັບມື້ນັບເພີ່ມຂຶ້ນ. ຄວາມຕ້ອງການດ້ານຊັບພະຍາກອນທຳມະຊາດຕ່າງໆນັ້ນແມ່ນລວມທັງຊັບພະຍາກອນໄມ້, ການຂຸດຄົ້ນບໍ່ແຮ່ ແລະ ນ້ຳມັນ ແລະ ການສ້າງເຂື່ອນຕາມສາຍນ້ຳເພື່ອພະລັງງານໄຟຟ້າ. ສິ່ງເຫຼົ່ານີ້ອາດນຳໄປສູ່ການປ່ຽນແປງຂະໜາດໃຫຍ່ຕໍ່ຊີວິດຂອງປະຊາຊົນ, ມາສູ່ທຳມະຊາດອັນເປັນບ່ອນທຳມາຫາກິນຂອງເຂົາເຈົ້າຕະຫຼອດຮອດສິ່ງແວດລ້ອມຢູ່ບໍລິເວນຂອບເຂດຂອງໂຄງການນຳອີກດ້ວຍ. ຖ້າການພັດທະນາຫາກມີຄວາມຍືນຍົງ, ໂຄງການເຫຼົ່ານີ້ກໍ່ສາມາດນຳເອົາຜົນປະໂຫຍດມາສູ່ປະຊາຊົນທ້ອງຖິ່ນໄດ້.ສະນັ້ນ, ໂຄງການພັດທະນາທີ່ມີລັກສະນະດັ່ງກ່າວຂ້າງເທິງນັ້ນຄວນຫຼີກລ້ຽງຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ແລະ ບໍ່ຄວນເຮັດໃນສິ່ງທີ່ຈະນຳໄປສູ່ຄວາມເສື່ອມເສຍຕ່າງໆ.

ແຕ່ໃນສະພາບຄວາມເປັນຈິງແລ້ວເຫັນວ່າໂຄງການດັ່ງກ່າວສ່ວນໃຫຍ່ລ້ວນແຕ່ນຳໄປສູ່ບັນຫາ ແລະ ຜົນກະທົບໃນທາງລົບທີ່ມີໄລຍະຍາວນານນຳອີກ ເຊິ່ງໃນນັ້ນກໍ່ແມ່ນລວມທັງຜົນກະທົບຕໍ່ສິດທິມະນຸດໃນດ້ານຕ່າງໆ. ເຫດຜົນສຳຄັນອັນໜຶ່ງແມ່ນຍ້ອນໂຄງການເຫຼົ່ານັ້ນໄດ້ຮັບການພັດທະນາຂຶ້ນມາໂດຍປາສະຈາກການພິຈາລະນາຄວາມເປັນຈິງຂອງສິດ ແລະ ຜົນປະໂຫຍດຂອງປະຊາຊົນ ແລະ ສິ່ງແວດລ້ອມທີ່ໄດ້ຮັບຜົນກະທົບຈາກໂຄງການ. ຜົນກະທົບຈາກການສ້າງໂຄງການຂະໜາດໃຫຍ່ທີ່ມີຕໍ່ຊຸມຊົນນັ້ນມີຫຼາຍຮູບແບບ. ຕາຕະລາງຕໍ່ໄປນີ້ຈະສະແດງໃຫ້ເຫັນທ່າແຮງດ້ານປະສິດທິຜົນ ຂອງໂຄງການ:

| ຜົນກະທົບທາງດ້ານບວກ ຫຼື ຜົນປະໂຫຍດ | ຜົນກະທົບທາງດ້ານລົບ ຫຼື ຜົນກະທົບ |
|---|---|
| ສ້າງວຽກເຮັດງານທຳໃຫ້ຄົນໃນຊຸມຊົນຫຼາຍຂຶ້ນ | ມີຄວາມກົດດັນໃຫ້ແກ່ຊຸມຊົນຕ້ອງຍ້າຍໜີຈາກທີ່ດິນ |
| ໃຫ້ການຝຶກອົບຮົມດ້ານທັກສະ | ເຮັດໃຫ້ຊຸມຊົນຂາດໂອກາດໃນການເຂົ້າເຖິງທີ່ດິນເພື່ອທຳການຜະລິດ ຫຼື ປະຕິບັດກິດຈະກຳທາງດ້ານວັດທະນະທຳຂອງທ່ານ |
| ຕອບສະໜອງນ້ຳດື່ມທີ່ສະອາດ ແລະ ລະບົບການອະນາໄມທີ່ດີໃຫ້ແກ່ຊຸມຊົນ | ແຕ່ເຮັດໃຫ້ເກີດມົນລະພິດແກ່ນ້ຳ ຫຼື ອາກາດຂອງຊຸມຊົນ |
| ປັບປຸງການຜະລິດສະບຽງອາຫານຂອງຊຸມຊົນ | ແຕ່ເຮັດໃຫ້ເກີດການສູນເສຍປາ, ສັດຕ່າງໆ ຫຼື ຕົ້ນໄມ້ ໃນເຂດພື້ນທີ່ຂອງທ່ານ |
| ຕອບສະໜອງຜົນປະໂຫຍດດ້ານການເງິນແກ່ຊຸມຊົນ | ແຕ່ເຮັດໃຫ້ເກີດບັນຫາຄວາມຮຸນແຮງ ແລະ ຄວາມກົດດັນທາງສັງຄົມເພີ່ມຂຶ້ນ |
| ມີໂຮງຮຽນ, ມີສຸກສາລາ ແລະ ເຮືອນໃໝ່ໃຫ້ຊຸມຊົນ | ແຕ່ລະຄົນໃນຊຸມຊົນບໍ່ມີວຽກເຮັດງານທຳໝັ້ນຄົງ |
| | ຄົນງານມາເຮັດວຽກນຳໂຄງການເຮັດໃຫ້ເກີດມີຄວາມສ່ຽງດ້ານສຸຂະພາບແກ່ຊຸມຊົນ |

ສິດທິຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈ (FPIC) ແມ່ນສິດທິລວມໝູ່ທີ່ມີຄວາມສຳຄັນທີ່ສາມາດຊ່ວຍໃຫ້ໂຄງການມີຄວາມຍືນຍົງຫຼາຍກວ່າ. ບ່ອນໃດທີ່ໂຄງການສ້າງຜົນກະທົບຕໍ່ຊີວິດ, ການດຳລົງຊີວິດ ຫຼື ທີ່ດິນ ແລະ ດິນແດນປະຊາຊົນບັນດາເຜົ່າ, ເຂົາເຈົ້າສາມາດຮ້ອງຟ້ອງເພື່ອຂໍຄວາມເປັນທຳໄດ້, ສຳລັບຊຸມຊົນອື່ນໆທີ່ໄດ້ຮັບຜົນກະທົບຈາກໂຄງການນັ້ນໂຄງການກໍ່ຕ້ອງຮັບປະກັນໃຫ້ເຂົາເຈົ້າໄດ້ມີສ່ວນຮ່ວມໃນການເຈລະຈາກ່ຽວກັບການວາງແຜນ ແລະ ການປະຕິບັດໂຄງການເຫຼົ່ານັ້ນຢ່າງເຕັມສ່ວນ ແລະ ມີປະສິດທິຜົນ.

ເຖິງວ່າຢູ່ບ່ອນໃດທີ່ກົດໝາຍແຫ່ງຊາດຍັງບໍ່ທັນໃຫ້ການປົກປ້ອງສິດທິ ດ້ານຄວາມເປັນອິດສະຫຼະໃນການຕັດສິນໃຈຂອງຊຸມຊົນ ແລະ ສິດຂອງປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການໃນການເຂົ້າຮ່ວມການປຶກສາຫາລື ແລະ ການມີສ່ວນຮ່ວມໃນຂະບວນການຕັດສິນໃຈກ່ຽວກັບໂຄງການນັ້ນເຈົ້າຂອງໂຄງການກໍ່ຄວນໃຫ້ຄວາມເຄົາລົບ ແລະ ນັບຖືສິດທິ, ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່າ (FPIC).

ສະນັ້ນ, ຄູ່ມືແນະນຳສະບັບນີ້ ມີຈຸດປະສົງເພື່ອຊ່ວຍໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການເຂົ້າໃຈແຈ້ງເຖິງສິດທິ ແລະ ຄວາມເປັນອິດສະຫຼະໃນການຕັດສິນໃຈຂອງປະຊາຊົນບັນດາເຜົ່າ ແລະ ໃຫ້ຊຸມຊົນຮັບຮູ້ວ່າສິດທິ ແລະ ຄວາມເປັນອິດສະຫຼະໃນການຕັດສິນໃຈຂອງປະຊາຊົນບັນດາເຜົ່ານີ້ໄດ້ຮັບການປະຕິບັດ ແລະ ດຳເນີນໄປຄືແນວໃດ? ຄູ່ມືແນະນຳສະບັບນີ້ມີຈຸດປະສົງເພື່ອໃຫ້ຂໍ້ມູນແກ່ຊຸມຊົນ ແລະ ສະໜັບສະໜູນໃນການປົກປ້ອງສິດທິຂອງເຂົາເຈົ້າຕໍ່ພື້ນທີ່ ແລະ ເຂດແດນຂອງຕົນທີ່ສະເໜີໃຫ້ມີການກໍ່ສ້າງໂຄງການ. ມັນແມ່ນເຄື່ອງມືສຳລັບຊຸມຊົນເພື່ອເຈລະຈາຕໍ່ລອງກັບເຈົ້າຂອງໂຄງການ ແລະ ລັດຖະບານຢ່າງສົມເຫດສົມຜົນ.

## ຄວາມເຂົ້າໃຈກ່ຽວກັບສິດທິ,ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈ: ສິດທິ, ຄວາມມີອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່າ

ສິດທິ, ຄວາມມີອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່າແມ່ນຫຼັກການກ່ຽວກັບສິດສະເພາະຂອງຊຸມຊົນທ້ອງຖິ່ນທີ່ຄົນອື່ນໃຫ້ຄວາມເຄົາລົບນັບຖື. ສິດອັນນີ້ແມ່ນສິດລວມໝູ່ເຊິ່ງໝາຍເຖິງສິດທິຂອງທຸກໆຄົນໃນທົ່ວຊຸມຊົນທີ່ມີສິດຈະອະນຸຍາດ ຫຼື ປະຕິເສດທີ່ຈະອະນຸຍາດແກ່ໂຄງການທີ່ຈະກໍ່ສ້າງໃນເຂດພື້ນທີ່ຂອງຕົນແຕ່ລະພາກສ່ວນຂອງຄໍາສັບເຫຼົ່ານີ້ລ້ວນແຕ່ມີຄວາມໝາຍສໍາຄັນສໍາລັບປະຊາຊົນແຕ່ລະຄົນ ແລະ ສໍາລັບຊຸມຊົນຂອງພວກເຂົາເຈົ້າອັນດັບຕໍ່ໄປນີ້ຈະສະເໜີຄໍາອະທິບາຍງ່າຍໆ ກ່ຽວກັບຄວາມໝາຍຂອງແຕ່ລະຄໍາສັບ:

**- ອິດສະຫຼະ:** ຄວາມເປັນອິດສະຫຼະຈາກການໃຊ້ກໍາລັງບັງຄັບ, ການນາບຂູ່, ການຊັກຊວນ, ການໂນ້ມນ້າວດ້ວຍກໍາລັງ ຫຼື ຄວາມກົດດັນຈາກລັດຖະບານ ຫຼື ບໍລິສັດ.

**- ກ່ອນ:** ກ່ອນທີ່ລັດຖະບານຈະຈັດສັນທີ່ດິນໄປນໍາໃຊ້ເຂົ້າໃນກິດຈະການສະເພາະໃດໜຶ່ງ ແລະ ກ່ອນການອະນຸມັດໃຫ້ດໍາເນີນໂຄງການສະເພາະໃດໜຶ່ງ.ລັດຖະບານຈະຕ້ອງໃຫ້ເວລາປະຊາຊົນຢ່າງພຽງພໍເພື່ອພິຈາລະນາໄຕ່ຕອງຂໍ້ມູນຕ່າງໆຢ່າງຖີ່ຖ້ວນກ່ອນການຕັດສິນໃຈ.

**- ການຮັບຮູ້ຂໍ້ມູນຂ່າວສານ:** ປະຊາຊົນຕ້ອງໄດ້ຮັບຂໍ້ມູນຂ່າວສານທີ່ກ່ຽວຂ້ອງຢ່າງຄົບຖ້ວນເພື່ອເປັນບ່ອນອີງໃນການຕັດສິນໃຈວ່າຈະຕົກລົງ ຫຼື ບໍ່ຕົກລົງໃຫ້ດໍາເນີນໂຄງການ. (ເບິ່ງລາຍລະອຽດຕື່ມຢູ່ໜ້າ 16 ແລະ ແຖວທີ17 ຄໍາຖາມຕ່າງໆສໍາລັບຖາມ ເຈົ້າຂອງໂຄງພ້ອມດຽວກັນນັ້ນຂໍ້ມູນຂ່າວສານຕ້ອງມີລັກສະນະດັ່ງນີ້:

- ຂໍ້ມູນຂ່າວສານຕ້ອງເປັນພາສາທີ່ປະຊາຊົນສາມາດອ່ານເຂົ້າໃຈໄດ້ງ່າຍ.
- ປະຊາຊົນຕ້ອງສາມາດເຂົ້າເຖິງຂໍ້ມູນຂ່າວສານຢ່າງມີຄວາມເປັນເອກະລາດ, ບໍ່ແມ່ນພຽງແຕ່ຂໍ້ມູນທີ່ໄດ້ຮັບຈາກລັດຖະບານ ຫຼື ເຈົ້າຂອງໂຄງການເທົ່ານັ້ນ.
- ໃນກໍລະນີມີຄວາມຈໍາເປັນ, ປະຊາຊົນກໍ່ຕ້ອງສາມາດປຶກສາຜູ້ຊ່ຽວຊານດ້ານກົດໝາຍ ຫຼື ນັກວິຊາການທີ່ກ່ຽວຂ້ອງເພື່ອຂໍຄໍາ ປຶກສາຫາລືກ່ອນການຕັດສິນໃຈ.

**- ຄວາມເຫັນດີເຫັນພ້ອມ:** ຕໍ່ກັບຄວາມເຫັນດີເຫັນພ້ອມນີ້, ບຸກຄົນທີ່ມີສ່ວນຮ່ວມໂຄງການຈະຕ້ອງອະນຸຍາດໃຫ້ປະຊາຊົນບັນດາເຜົ່າປະກອບຄວາມຄິດເຫັນຂອງຕົນຢ່າງເປັນເອກະລາດວ່າຈະ “ເຫັນດີ” ຫຼື “ບໍ່ເຫັນດີ” ກັບໂຄງການ ແລະ ກັບແຕ່ລະຂັ້ນຕອນຂອງໂຄງການ. ທັງໝົດນັ້ນແມ່ນອີງຕາມຂະບວນການຕັດສິນໃຈຂອງປະຊາຊົນເອງ. ສິດທິໃນການທີ່ຈະອະນຸຍາດ ຫຼື ຢັບຢັ້ງການກໍ່ສ້າງໂຄງການນີ້ແມ່ນມີຄວາມສໍາຄັນແຕກຕ່າງກັນລະຫວ່າງສິດຂອງປະຊາຊົນບັນດາເຜົ່າຢູ່ໃນທ້ອງຖິ່ນກັບສິດຂອງປະຊາຊົນບັນດາເຜົ່າທົ່ວໄປທີ່ໄດ້ຮັບຜົນກະທົບຈາກໂຄງການ.

ສໍາລັບປະຊາຊົນທີ່ບໍ່ແມ່ນຄົນຊົນເຜົ່ານັ້ນ, ສິດທິຂອງພວກທ່ານໃນການທີ່ຈະໄດ້ຮັບຄໍາປຶກສາຫາລື ຫຼື ໃນການເຈລະຈາໃນຂະບວນການຕັດສິນບັນຫາທີ່ມີຜົນກະທົບເຖິງພວກທ່ານນັ້ນກໍ່ຄວນຖືເອົາຄໍາແນະນໍາຂອງຫຼັກການແຫ່ງຄວາມເປັນອິດສະຫຼະ, ຄວາມພ້ອມ ແລະ ຄວາມເຫັນດີເຫັນພ້ອມນີ້ມາເປັນບ່ອນອີງໄດ້ຄືກັນ ກັບການປຶກສາຫາລື ແລະ ການເຈລະຈາຄວນດໍາເນີນພາຍໃຕ້ເງື່ອນໄຂທີ່ປະຊາຊົນບໍ່ຖືກບີບບັງຄັບ ຫຼື ຖືກກົດດັນໃຫ້ເຂົ້າຮ່ວມເທົ່ານັ້ນ.

ສະນັ້ນ, ກ່ອນການຕັດສິນໃຈ ແລະ ການອະນຸຍາດ ຫຼື ບໍ່ດັ່ງນັ້ນທ່ານຄວນຈະໄດ້ຮັບຮູ້ຂໍ້ມູນຂ່າວສານກ່ຽວກັບບັນຫາທີ່ຍົກຂຶ້ນມາສົນທະນາ ແລະ ເຈລະຈາກັນນັ້ນຢ່າງເລິກເຊິ່ງກ່ອນ.

ສິດທິໃນຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງຊຸມຊົນບັນດາເຜົ່ານັ້ນເປັນຫຼັກການທີ່ໃຫ້ການປົກປ້ອງສິດທິຂອງຊຸມຊົນເພື່ອເຈລະຈາໃນການຕັດສິນບັນຫາທີ່ກະທົບຕໍ່ປະຊາຊົນ. ໝາຍຄວາມວ່າສິດທິດັ່ງກ່າວນີ້ກໍ່ສາມາດເປັນຂະບວນການຕັດສິນໃຈຕາມຮີດຄອງປະເພນີຂອງຊຸມຊົນໄດ້. ຊຸມຊົນບາງແຫ່ງໄດ້ເລືອກຕົວແທນຂອງຕົນເພື່ອເຈລະຈາກັບເຈົ້າຂອງໂຄງການໃນນາມຊຸມຊົນ.

*ຂໍ້ທີ່ຄວນຈໍາ: ເພື່ອຊ່ວຍໃຫ້ປະຊາຊົນເຂົ້າໃຈສິດທິໃນຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງຊຸມຊົນໄດ້ດີນັ້ນ, ຄະນະຈັດພິມປຶ້ມຄູ່ມືສະບັບນີ້ ຂໍແນະນໍາໃຫ້ຜູ້ອ່ານໄປອ່ານເພີ່ມໃນແຕ່ລະມາດຕາຂອງຖະແຫຼງການອົງການສະຫະປະຊາຊາດວ່າດ້ວຍສິດທິຂອງປະຊາຊົນ ບັນດາເຜົ່າ.*

**ຊຸມຊົນມີຄວາມຈໍາເປັນຕ້ອງເອົາໃຈໃສ່ເຝົ້າລະວັງນັກພັດທະນາໂຄງການ ຜູ້ທີ່ຍາມໃດກໍ່ພະຍາຍາມມາສ້າງວິທີການ ຫຼື ຂະບວນການຂອງຕົນເອງຂຶ້ນມາເພື່ອບັງຄັບ ແລະ ປັບປຸງຂະບວນການຕັດສິນໃຈແບບປະເພນີຊົນເຜົ່າທີ່ມີມາກ່ອນແລ້ວໃນຊຸມຊົນ.**

## ສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງຊຸມຊົນ ມີທີ່ມາຈາກໃສ? ສິດທິອັນນີ້ມີໄວ້ສໍາລັບຜູ້ໃດ?

ສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນຜັນດາເຜົ່າ ແມ່ນສິດທີ່ຮັບຮູ້ໂດຍກົດໝາຍສາກົນ. ເຖິງວ່າກົດໝາຍອາດມີຄວາມແຕກຕ່າງກັນລະຫວ່າງລັດ ແລະ ແຂວງຕ່າງໆກໍ່ດີ, ແຕ່ມີບາງປະເທດກໍ່ໄດ້ກໍານົດເອົາສິດທິດັ່ງກ່າວນີ້ໄວ້ຢູ່ໃນກົດໝາຍແຫ່ງຊາດຂອງຕົນເຊັ່ນ: ປະເທດຟີລິບປິນ ແລະ ຢູ່ບາງເຂດຂອງປະເທດອົດສະຕຼາລີ.

ພ້ອມດຽວກັນນັ້ນ, ສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່ານີ້ກໍ່ໄດ້ຖືກຮັບຮູ້ວ່າເປັນວິທີການປະຕິບັດອັນດີມີປະສິດທິຜົນໃນຫຼາຍໆໂຄງການພັດທະນາ ເຊິ່ງເປັນປະໂຫຍດໃຫ້ແກ່ບໍລິສັດຕ່າງໆ ທີ່ລົງທຶນໃສ່ການກໍ່ສ້າງໂຄງການພັດທະນາຂະໜາດໃຫຍ່. ຕົວຢ່າງ: ມັນສາມາດຫຼຸດຜ່ອນຄວາມສ່ຽງຕໍ່ການເກີດຄວາມຂັດແຍ່ງລະຫວ່າງຊຸມຊົນກັບບໍລິສັດຖ້າວ່າຊຸມຊົນຕ່າງໆຫາກມີຄວາມຫ້າວຫັນເຂົ້າຮ່ວມໃນການຕັດສິນບັນຫາຂອງໂຄງການແຕ່ຫົວທີ. ນອກຈາກນັ້ນລັດຖະບານເອງກໍ່ສາມາດໄດ້ຜົນປະໂຫຍດຈາກການປົກປ້ອງສິດທິຂອງ ປະຊາຊົນດັ່ງກ່າວນີ້ນໍາອີກດ້ວຍ.

ແຜນວາດທີ່ສະເໜີຕໍ່ໄປນີ້ ເປັນການສະແດງໃຫ້ເຫັນພາບລວມໄດ້ໂດຍສັງເຂບວ່າ ສິດທິ ແລະ ຄວາມເປັນອິດສະຫຼະ ໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່າ ມີຕົ້ນກໍາເນີດມາຈາກໃສ ແລະ ມີໄວ້ສໍາລັບຜູ້ໃດ (ໃຫ້ຜູ້ໃດໃຊ້ສໍາລັບຮ້ອງຮຽນເຖິງຜູ້ໃດ).




***ໝາຍເຫດ:*** *ກົດໝາຍສາກົນວ່າດ້ວຍສິດທິມະນຸດ, ສົນທິສັນຍາວ່າດ້ວຍສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທໍາ, ສົນທິສັນຍາວ່າດ້ວຍສິດທິພົນລະເມືອງ, ສິດທິທາງການເມືອງ ແລະ ສົນທິສັນຍາອົງການຈັດຕັ້ງແຮງງານສາກົນລ້ວນແຕ່ມີຄວາມສອດຄ່ອງສໍາລັບການນໍາໃຊ້ຫຼັກການພື້ນຖານຂອງສິດທິດ້ານອິດສະຫຼະ, ຄວາມພ້ອມ ແລະ ຄວາມເຫັນດີເຫັນພ້ອມສໍາລັບປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ.*

# ບາດກ້າວຕ່າງໆທາງພາກປະຕິບັດ

ວິທີການນຳໃຊ້ຫຼັກການກ່ຽວກັບສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການ
ຕັດສິນໃຈຂອງປະຊາຊົນບັນດາເຜົ່າ ເພື່ອປົກປ້ອງສິດທິຂອງທ່ານ.



# ບາດກ້າວທີ 1:

**ການຊອກຫາບຸກຄົນຜູ້ທີ່ກຳລັງສ້າງແຜນໂຄງການ.**

ກ່ອນອື່ນໝົດ, ເຮົາຕ້ອງຮູ້ວ່າແມ່ນໃຜເປັນຜູ້ສ້າງແຜນງານໂຄງການທີ່ອາດຈະມີຜົນກະທົບແກ່ຊຸມຊົນຂອງຕົນ. ຈາກນັ້ນເຮົາຈຶ່ງຈະຮູ້ວ່າໃຜແມ່ນຄົນຜູ້ທີ່ຈະສະແຫວງຫາຄວາມເຫັນດີເຫັນພ້ອມຈາກພວກເຮົາ. ຜູ້ວາງແຜນໂຄງການ ແລະ ເຈົ້າຂອງໂຄງການອາດຈະປະກອບດ້ວຍບຸກຄົນດັ່ງຕໍ່ໄປນີ້:

- ລັດຖະບານຂອງເຮົາເອງ
- ບໍລິສັດເອກະຊົນ (ເຊັ່ນ ບໍລິສັດຂຸດຄົ້ນແຮ່ ຫຼື ບໍລິສັດກໍ່ສ້າງ)
- ລັດຖະບານຕ່າງປະເທດ
- ອຳນາດການປົກຄອງທ້ອງຖິ່ນ (ອົງການປົກປັກຮັກສາສິ່ງແວດລ້ອມ, ກົມຄຸ້ມຄອງສິ່ງແວດລ້ອມ ຫຼື ຊັບພະຍາກອນທຳມະຊາດ)
- ທະນາຄານຫຼືສະຖາບັນການເງິນສາກົນ (ເຊັ່ນ: ທະນາຄານໂລກ, ທະນາຄານພັດທະນາອາຊີຫຼືທະນາຄານພັດທະນາອາຟຣິກາ).

ບາງຄັ້ງກໍ່ມີຄວາມຫຍຸ້ງຍາກທີ່ຈະໄດ້ພົບຂໍ້ມູນວ່າແມ່ນໃຜເປັນເຈົ້າຂອງໂຄງການ,ທັງນີ້ກໍ່ເນື່ອງຈາກວ່າໂຄງການຂະໜາດໃຫຍ່ສ່ວນຫຼາຍມັກຈະເປັນຜົນປະໂຫຍດຮ່ວມລະຫວ່າງລັດຖະບານກັບເອກະຊົນ. ຖ້າຫາກທ່ານມີຄວາມຫຍຸ້ງຍາກໃນການຊອກຫາຂໍ້ມູນຂ່າວສານກ່ຽວກັບໂຄງການ, ທ່ານສາມາດຮັບການຊ່ວຍເຫຼືອຈາກອົງການຈັດຕັ້ງຕ່າງໆລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານລະດັບທ້ອງຖິ່ນ ແລະ ລະດັບສາກົນ. ບັນດາສື່ຕ່າງໆລວມທັງໜັງສືພິມ ແລະ ວາລະສານດ້ານອຸດສາຫະກຳ (ເຊັ່ນ: ວາລະສານຂຸດຄົ້ນແຮ່) ກໍ່ສາມາດໃຫ້ຂໍ້ມູນຂ່າວສານກ່ຽວກັບແຜນຂອງໂຄງການ. ບາງຄັ້ງເຈົ້າຂອງໂຄງການບໍ່ແມ່ນຄົນພາຍໃນປະເທດ, ແຕ່ເປັນຄົນຊາດອື່ນ.

ໃນກໍລະນີນີ້ ກໍ່ຍິ່ງຈະມີຄວາມຫຍຸ້ງຍາກໃນການພົວພັນກັບພວກເຂົາເຈົ້າ. ສະນັ້ນ, ຈຶ່ງຕ້ອງອາໄສການຊ່ວຍເຫຼືອຈາກຜູ້ອື່ນໆເພື່ອໃຫ້ໄດ້ຂໍ້ມູນຂ່າວສານ ກ່ຽວກັບເຈົ້າຂອງໂຄງການ.

# ໃຜເປັນຜູ້ຮັບຜິດຊອບ?




ໂດຍສ່ວນໃຫຍ່ແລ້ວ, ເຈົ້າຂອງໂຄງການ ແລະ ຜູ້ທີ່ມີຄວາມຮັບຜິດຊອບໃນການສະແຫວງຫາຄວາມເຫັນດີເຫັນພ້ອມ ຈາກປະຊາຊົນ ແມ່ນຕົວແທນຂອງອົງການຈັດຕັ້ງ ຕ່າງໆດັ່ງກ່າວຂ້າງເທິງ.

## ຄຳແນະນຳ 1:

ຊອກຮູ້ວ່າມີອົງການຈັດຕັ້ງໃດແດ່ທີ່ເຮັດໜ້າທີ່ຊ່ວຍຈັດການດ້ານທີ່ດິນ ແລະ ຊັບພະຍາກອນທຳມະຊາດໃນປະເທດເພື່ອນບ້ານໃກ້ຄຽງ. ຕົວຢ່າງ: ໃນແຕ່ລະປະເທດ ອາດຈະມີອົງການຈັດຕັ້ງທີ່ເຮັດໜ້າທີ່ຄຸ້ມຄອງແມ່ນ້ຳທີ່ໄຫຼຜ່ານປະເທດນັ້ນ. ຖ້າວ່າມີ, ກໍ່ໃຫ້ຊອກຮູ້ວ່າປະເທດຂອງເຮົາໄດ້ເປັນສະມາຊິກຂອງອົງການຈັດຕັ້ງນັ້ນບໍ? ຖ້າວ່າທ່ານ ຫຼື ຊຸມຊົນຂອງທ່ານ ມີບັນຫາກ່ຽວກັບໂຄງການໄຟຟ້ານ້ຳຕົກ ທ່ານກໍ່ສາມາດຂໍຄວາມຊ່ວຍເຫຼືອຈາກອົງການຈັດຕັ້ງດັ່ງກ່າວ ເພື່ອຊອກຮູ້ລາຍລະອຽດຂອງໂຄງການໄຟຟ້ານັ້ນໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້.



# ບາດກ້າວທີ 2:

**ການຂໍເອົາຂໍ້ມູນຂ່າວສານຈາກຜູ້ສ້າງໂຄງການ.**

ສິ່ງທີ່ສຳຄັນປະຊາຊົນຕ້ອງຮູ້ວ່າໂຄງການທີ່ສະເໜີຂໍສ້າງຂຶ້ນໃໝ່ນັ້ນຈະມີຜົນກະທົບກັບຊຸມຊົນຂອງທ່ານເອງຄືແນວໃດ. ຫລັງຈາກຮັບຊາບ ແລະ ເຂົ້າໃຈຂໍ້ມູນໂຄງການລະອຽດແລ້ວທ່ານກໍ່ຈະສາມາດຕັດສິນໃຈໄດ້ວ່າ: ການປຮັບອັນໃດແດ່ໃນການອອກແບບໂຄງການທີ່ທ່ານຕ້ອງການໃຫ້ມີ.

- ຈະອະນຸຍາດໃຫ້ ຫຼື ຢັບຢັ້ງການສ້າງໂຄງການໃນເຂດພື້ນທີ່ຂອງທ່ານ.
- ການປຮັບແປງອັນໃດແດ່ໃນການອອກແບບໂຄງການທີ່ທ່ານຕ້ອງການໃຫ້ມີ.
- ເງື່ອນໄຂໃດແດ່ທີ່ທ່ານມີຄວາມຈຳເປັນໃຫ້ແກ້ໄຂຕາມຄວາມຕ້ອງການກ່ອນການຕົກລົງກັບໂຄງການ.

ວິທີທາງຕ່າງໆທີ່ໂຄງການຈະສົ່ງຜົນກະທົບຕໍ່ຊຸມຊົນແມ່ນໄດ້ກຳນົດໄວ້ຢູ່ໜ້າທີ 8 ຂອງພາກ "ການກຳນົດສະຖານທີ່ຂອງໂຄງການ: ຄຳແນະນຳອັນນີ້ມີຄວາມຈຳເປັນຄືແນວໃດໃນເວລານີ້?"

ຖ້າປະຊາຊົນຄົນໃດຄິດວ່າຊຸມຊົນຂອງຕົນຈະໄດ້ຮັບຜົນກະທົບຈາກໂຄງການ, ປະຊາຊົນຜູ້ນັ້ນກໍ່ມີສິດຂໍຮູ້ຂໍ້ມູນຂອງໂຄງການຈາກເຈົ້າຂອງໂຄງການເປັນພາສາຂອງຕົນເອງ. ສິ່ງທີ່ສຳຄັນອີກອັນໜຶ່ງແມ່ນໃຫ້ຊຸມຊົນໄດ້ຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງເຖິງຖອງກ່ຽວກັບໂຄງການນັ້ນໆ, ໂດຍສະເພາະແມ່ນຜົນກະທົບທີ່ອາດມີຈາກໂຄງການນັ້ນ ແລະ ສິ່ງສຳຄັນຍິ່ງໄປກວ່ານັ້ນກໍ່ຄືຕ້ອງໃຫ້ຮູ້ວ່າເຈົ້າຂອງໂຄງການຈະມີວິທີປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຂອງໂຄງການນັ້ນແນວໃດ.

ສິ່ງສຳຄັນກໍ່ຄືໃຫ້ຊຸມຊົນຂໍເອົາສຳເນົາການປະເມີນຜົນກະທົບດ້ານສັງຄົມ ແລະ ສິ່ງແວດລ້ອມທີ່ເປັນພາສາຂອງຕົນເອງຈາກໂຄງການ. ການປະຕິບັດຄືແນວນີ້ຈະສາມາດຊ່ວຍໃຫ້ສະມາຊິກທຸກຄົນໃນຊຸມຊົນຮູ້ ແລະ ເຂົ້າໃຈກ່ຽວກັບໂຄງການວ່າຈະສົ່ງຜົນກະທົບຄືແນວໃດແດ່ໃຫ້ແກ່ຊຸມຊົນ. ພ້ອມດຽວກັນນັ້ນກໍ່ຈະເປັນການປ້ອງກັນຂະບວນການເຈລະຈາເພື່ອຜົນປະໂຫຍດສ່ວນຕົວຂອງສະມາຊິກຜູ້ໃດຜູ້ໜຶ່ງໃນຊຸມຊົນ.

**ສິ່ງສຳຄັນຊຸມຊົນຂອງທ່ານຈະຕ້ອງຊອກຮູ້ຂໍ້ມູນກ່ຽວກັບຂອບເຂດທີ່ຕັ້ງໂຄງການ ເພື່ອໃຫ້ມີຄວາມໝັ້ນໃຈວ່າຜູ້ສ້າງໂຄງການໄດ້ພິຈາລະນາກຳນົດໃຫ້ເຫັນຈຳນວນຊຸມຊົນທັງໝົດໃນຂອບເຂດໂຄງການທີ່ອາດຈະໄດ້ຮັບຜົນກະທົບຈາກໂຄງການ. ຖ້າວ່າຊຸມຊົນຂອງທ່ານຫາກບໍ່ຖືກພິຈາລະນາເປັນຊຸມຊົນເປົ້າໝາຍທີ່ຈະໄດ້ຮັບຜົນກະທົບຈາກໂຄງການ, ເວລານັ້ນ ເຈົ້າຂອງໂຄງການຈະບໍ່ປຶກສາຫາລື ແລະ ເຈລະຈາກັບຊຸມຊົນຂອງທ່ານ.**

ນອກຈາກນີ້ກໍຍັງມີວິທີການໜຶ່ງອີກ ເພື່ອໃຫ້ໄດ້ຂໍ້ມູນຈາກຜູ້ສ້າງໂຄງການນັ້ນ ວິທີການໃຊ້ຄຳຖາມກັບເຈົ້າຂອງໂຄງການເອງ. ຫຼັງຈາກນັ້ນໃຫ້ປະຊາຊົນບັນທຶກຂໍ້ມູນທີ່ໄດ້ຈາກການຕອບຄຳຖາມຂອງເຈົ້າຂອງໂຄງການມາຮ່ວມສົນທະນາກັບຊຸມຊົນຕື່ມອີກ. ກັບໃນໜ້າຕໍ່ໄປຍັງມີຄຳຖາມທີ່ເປັນປະໂຫຍດຫຼາຍຄຳຖາມ.

ນອກຈາກນີ້ແລ້ວທ່ານອາດຈະຖາມກົມກອງທີ່ກ່ຽວຂ້ອງທີ່ມີຢູ່ໃນປະເທດຂອງຕົນໂດຍກົງກໍໄດ້ເຊັ່ນ: ກົມສິ່ງແວດລ້ອມ, ກົມບໍ່ແຮ່, ກົມກະສິກຳ ແລະ ປ່າໄມ້ ຫຼື ກົມຄັງເງິນ. ແຫຼ່ງສະໜອງຂໍ້ມູນດັ່ງກ່າວນີ້ໃນແຕ່ລະປະເທດກໍ່ບໍ່ຄືກັນອີກປະການໜຶ່ງ, ເຖິງວ່າເວລານີ້ ໂຄງການຈະບໍ່ໄດ້ຕັ້ງຢູ່ໃນບໍລິເວນຊຸມຊົນຂອງທ່ານໂດຍກົງກໍ່ຕາມ, ແຕ່ຊຸມຊົນຂອງທ່ານກໍ່ອາດຈະໄດ້ຮັບຜົນກະທົບຈາກໂຄງການນັ້ນຄືກັນ. ເຊັ່ນຕົວຢ່າງ: ນ້ຳທີ່ເປັນພິດຍ້ອນການພັດທະນາໂຄງການຢູ່ບ່ອນໃດໜຶ່ງຈະໄຫຼຊອດຊຶມແຜ່ລາມໄປກະທົບໃສ່ຊຸມຊົນອື່ນທີ່ອາໄສຢູ່ໃນເຂດອ້ອມແອ້ມເຂດໂຄງການ ຫຼື ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຕົກ ກໍ່ອາດເປັນອຸປະສັກກີດກັ້ນຕໍ່ການເຄື່ອນຍ້າຍຂອງປາເຊິ່ງສົ່ງຜົນກະທົບຕໍ່ແຫຼ່ງອາຫານ ແລະ ການດຳລົງຊີວິດຂອງຊຸມຊົນຂອງທ່ານໄດ້.

*ຈົ່ງເຂົ້າໃຈວ່າ: ເຖິງວ່າໂຄງການຈະຕັ້ງຢູ່ປະເທດອື່ນກໍ່ຕາມແຕ່ມັນກໍ່ສາມາດສົ່ງຜົນສະທ້ອນຕໍ່ຊຸມຊົນຂອງເຮົາໄດ້ຄືກັນ ເຊັ່ນຕົວຢ່າງ: ໂຄງການຂຸດຄົ້ນບໍ່ແຮ່ທີ່ຕັ້ງຢູ່ປະເທດອື່ນ ອາດຖ່າຍເທຄວາມເປື້ອນເປິຂອງມັນລົງສູ່ແມ່ນ້ຳໄຫຼຜ່ານປະເທດ ແລະ ຊຸມຊົນຂອງເຮົາຊຶ່ງເປັນແມ່ນ້ຳທີ່ຊຸມຊົນຂອງເຮົານຳໃຊ້ເຂົ້າໃນການດຳລົງຊີວິດ.*

### ຄຳແນະນຳ 2:

ທ່ານສາມາດຂໍເອົາຂໍ້ມູນຂ່າວສານກ່ຽວກັບໂຄງການໃຫ້ເປັນພາສາຂອງທ່ານເອງ ແລະ ໃນຮູບແບບທີ່ຊຸມຊົນສາມາດເຂົ້າໃຈໄດ້.

## ການສ້າງຄວາມເຂົ້າໃຈກ່ຽວກັບໂຄງການ

- ໂຄງການແມ່ນຫຍັງ ? ໂຄງການຈະເຮັດຫຍັງ?
- ໂຄງການນີ້ມີຂະໜາດໃຫຍ່ປານໃດ? ຈະສ້າງຂຶ້ນເວລາໃດ ແລະ ຈະໃຊ້ເວລາດຳເນີນງານດົນປານໃດ ?
- ໃຜເປັນເຈົ້າຂອງໂຄງການ (ເຊັ່ນ: ບໍລິສັດເອກະຊົນ ຫຼື ລັດຖະບານ)?
- ປະຫວັດຄວາມເປັນມາ ຫຼື ຜົນງານຂອງບໍລິສັດໃນໄລຍະຜ່ານມາເປັນແນວໃດ?,ບໍລິສັດມີຊື່ສຽງດີ ຫຼື ບໍ່ດີ?
- ໃຜເປັນຜູ້ໃຫ້ເງິນກູ້ຢືມແກ່ບໍລິສັດ (ຕົວຢ່າງ: ທະນາຄານການຄ້າ, ທະນາຄານໂລກ, ກອງທຶນເພື່ອການລົງທຶນ)?
- ທຸລະກິດຕົ້ນຕໍຂອງເຈົ້າຂອງໂຄງການແຕ່ລະຄົນແມ່ນຫຍັງ?
- ເຈົ້າຂອງໂຄງການເປັນຄົນເຊື້ອຊາດໃດ?
- ໂຄງການຈະສ້າງຫຍັງແດ່ຂຶ້ນມາເພື່ອຮັບໃຊ້ໂຄງການ (ຕົວຢ່າງ: ຖະໜົນ, ເຂື່ອນໄຟຟ້າ, ເສົາໄຟຟ້າຂະໜາດໃຫຍ່)
- ນອກຈາກບໍລິສັດ ຫຼື ລັດຖະບານແລ້ວມີໃຜອີກແດ່ຈະມີສ່ວນຮ່ວມໃນໂຄງການ (ເຊັ່ນ: ຜູ້ຕອບສະໜອງ ອຸປະກອນ ແລະ ຜູ້ຮັບເໝົາ)
- ລັດຖະບານຈະໃຫ້ການສະໜັບສະໜູນຫຍັງແດ່ແກ່ໂຄງການ (ເຊັ່ນ: ການຫຼຸດຜ່ອນ ຫຼື ບໍ່ຫຼຸດຜ່ອນພາສີໃຫ້ແກ່ເຈົ້າຂອງໂຄງການ, ຫຼຸດຜ່ອນຄ່າທຳນຽມການນຳໃຊ້ທີ່ດິນ)?
- ອຳນາດການປົກຄອງທ້ອງຖິ່ນມີຄວາມຄິດຄວາມເຫັນແນວໃດກ່ຽວກັບໂຄງການ?

***ໝາຍເຫດ:*** *ນີ້ແມ່ນຕົວຢ່າງຂອງຄຳຖາມເບື້ອງຕົ້ນ, ແຕ່ໃນຕົວຈິງຈະມີຄຳຖາມຫຼາຍກວ່ານີ້ອີກ ທີ່ຈະຖາມເຈົ້າຂອງໂຄງການທີ່ກ່ຽວຂ້ອງກັບໂຄງການໂດຍສະເພາະ, ຄຳຖາມກ່ຽວກັບຜົນກະທົບຕໍ່ຊຸມຊົນ ແລະ ກ່ຽວກັບວັດທະນະທຳ ແລະ ຄວາມເຊື່ອຖືຂອງຊຸມຊົນ.*

# ຄຳຖາມທີ່ເປັນປະໂຫຍດສຳລັບຖາມເຈົ້າຂອງໂຄງການ

## ຜົນກະທົບຂອງໂຄງການ

- ໂຄງການຈະສົ່ງຜົນກະທົບແນວໃດແດ່ຕໍ່ທີ່ດິນ?
- ມີແຜນທີ່ສະແດງບອກທີ່ດິນທີ່ຖືກກະທົບບໍ່? ຜົນກະທົບໃດແດ່ທີ່ຈະມີໃນໄລຍະຍາວນານຕໍ່ທີ່ດິນ ແລະ ຊັບພະຍາກອນອື່ນບໍ່?
- ເຈົ້າຂອງໂຄງການໄດ້ປະເມີນຜົນກະທົບດ້ານສິດທິມະນຸດ, ສິ່ງແວດລ້ອມ, ບົດບາດຍິງ-ຊາຍ ແລະ ສັງຄົມບໍ່?
- ມີຄວາມສ່ຽງໃດແດ່ທີ່ອາດເກີດຂຶ້ນຈາກໂຄງການ (ຕົວຢ່າງ: ມົນລະພິດ ຫຼື ການກີດກັ້ນການເຂົ້າໄປຫາເຂດພື້ນທີ່ສັກສິດ)?
- ມີບົດລາຍງານສະເພາະທີ່ລະບຸເຖິງລາຍລະອຽດກ່ຽວກັບຄວາມສ່ຽງຕ່າງໆ ແລະ ບົດລາຍງານນັ້ນມີໃຫ້ຊຸມຊົນ ຫຼື ບໍ່?
- ຊຸມຊົນຈະໄດ້ຮັບຜົນປະໂຫຍດດ້ານໃດແດ່ຈາກໂຄງການ ແລະ ຜົນປະໂຫຍດເຫຼົ່ານັ້ນ
  ອັນໃດເປັນຜົນປະໂຫຍດຍາວນານ ແລະ ອັນໃດເປັນຜົນປະໂຫຍດສະເພາະໜ້າ.
- ບໍລິສັດທີ່ເຂົ້າຮ່ວມໂຄງການຈະປະກອບສ່ວນອັນໃດແດ່ໃຫ້ແກ່ຊຸມຊົນ
  (ຕົວຢ່າງ: ການປຸກສ້າງໂຮງຮຽນ, ຖະໜົນຫົນທາງ, ໂຮງໝໍ ແລະ ໂຄງການພັດທະນາສັງຄົມດ້ານອື່ນໆ)?
- ໂຄງການຈະປະກອບສ່ວນໃນການຄໍ້າປະກັນການຄອບຄອງທີ່ດິນໃຫ້ຊຸມຊົນບໍ່?
- ຖ້າວ່າເຈົ້າຂອງໂຄງການຫາກເອົາທີ່ດິນຂອງປະຊາຊົນໄປເຂົາເຈົ້າຈະຈ່າຍເງິນສົດເຊີຍຄ່າທີ່ດິນ
  ແລະ ຫາດິນຕອນໃໝ່ໃຫ້ປະຊາຊົນບໍ່?

## ການປຶກສາຫາລື ແລະ ການເຈລະຈາຂອງຊຸມຊົນ

- ຊຸມຊົນຈະມີໂອກາດປະກອບຄໍາຄິດເຫັນເຂົ້າໃນການອອກແບບໂຄງການຄືແນວໃດແດ່?
  ແລະ ການປະກອບຄໍາຄິດເຫັນນີ້ຈະດໍາເນີນການແນວໃດ?
- ຊຸມຊົນຈະສາມາດເຂົ້າຮ່ວມໃນຂະບວນການປະເມີນຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມຄືແນວໃດ?
- ແມ່ນໃຜເປັນຜູ້ດໍາເນີນການປະເມີນຜົນກະທົບດ້ານສັງຄົມ ແລະ ສິ່ງແວດລ້ອມ ແລະ
  ຜົນຂອງການປະເມີນນັ້ນຈະໄດ້ຮັບການແປເປັນພາສາທ້ອງຖິ່ນຂອງຊຸມຊົນບໍ່?
- ບໍລິສັດໄດ້ປຶກສາຫາລືກັບໃຜແດ່?
- ບໍລິສັດຄິດເຖິງບໍ່ວ່າພວກເຂົາເຈົ້າໄດ້ຮັບຄວາມເຫັນດີເຫັນພ້ອມຈາກຊຸມຊົນ ຫຼື ບໍ່?
- ຈະມີການດໍາເນີນການຕາມຂັ້ນຕອນອັນໃດ ຖ້າວ່າມີການປ່ຽນແປງ
  ການອອກແບບໂຄງການ?
- ບໍລິສັດຈະດໍາເນີນການເຈລະຈາກັບຊຸມຊົນໃນແຕ່ລະຂັ້ນຕອນຂອງໂຄງການບໍ?
- ເຈົ້າຂອງໂຄງການຈະຕອບສະໜອງຕໍ່ບັນຫາຂອງຊຸມຊົນຄືແນວໃດ?
- ເຈົ້າຂອງໂຄງການພ້ອມທີ່ຈະເປີດເຜີຍກໍາໄລ ແລະ ຄ່າໃຊ້ຈ່າຍທຸກສ່ວນ
  ທີ່ພົວພັນເຖິງໂຄງການບໍ່?
- ເງິນກໍາໄລທີ່ໄດ້ຈາກໂຄງການຈະຖືກແບ່ງປັນໄປໃສແດ່?



## ບາດກ້າວທີ 3:

**ດຳເນີນການສົນທະນາພາຍໃນຊຸມຊົນ.**

ເມື່ອທ່ານມີການພົວພັນກັບເຈົ້າຂອງໂຄງການທ່ານກໍ່ຄວນເລີ່ມສົນທະນາກ່ຽວກັບລາຍລະອຽດຂອງໂຄງການພາຍໃນຊຸມຊົນຂອງຕົນ. ທຸກຄົນໃນທົ່ວຊຸມຊົນຄວນໄດ້ຮັບຊາບກ່ຽວກັບໂຄງການທີ່ສະເໜີສ້າງໃໝ່. ເຄື່ອງມືຕ່າງໆເຊັ່ນ: ແຜນທີ່, ແຜ່ນພັບໂຄສະນາ, ແຜ່ນປົດສະເຕີ ແລະ ວີດີໂອຕ່າງໆລ້ວນແລ້ວແຕ່ສາມາດນຳມາໃຊ້ເພື່ອເຜີຍແຜ່ຂ່າວສານ ໃຫ້ສະມາຊິກທຸກຄົນຂອງຊຸມຊົນໄດ້ຮູ້ຢ່າງທົ່ວເຖິງກັນ. ການປະຕິບັດເຊັ່ນນີ້ຈະຊ່ວຍໃຫ້ມີຄວາມໝັ້ນໃຈວ່າທຸກຄົນໄດ້ເຂົ້າໃຈເຖິງຜົນປະໂຫຍດ ແລະ ຜົນກະທົບທີ່ອາດຈະເກີດຂຶ້ນຈາກໂຄງການ. ສະນັ້ນ, ປະຊາຊົນໃນຊຸມຊົນຂອງທ່ານ ຕ້ອງເປັນຜູ້ຕັດສິນໃຈໃຫ້ໄດ້ວ່າອັນໃດມີຄວາມສຳຄັນ ຫຼັງຈາກນັ້ນຈຶ່ງມອບໝາຍໃຫ້ຜູ້ແທນຂອງຊຸມຊົນໄປດຳເນີນການເຈລະຈາກັບເຈົ້າຂອງໂຄງການຖ້າວ່າສິ່ງນັ້ນແມ່ນສິ່ງທີ່ຊຸມຊົນຕັດສິນໃຈຈະປະຕິບັດໃນຂັ້ນຕອນຕໍ່ໄປ.

ໃນເວລາດຳເນີນການສົນທະນາກັບເຈົ້າຂອງໂຄງການວ່າປະຊາຊົນໃນຊຸມຊົນຕ້ອງການອັນໃດນັ້ນ, ແມ່ນໃຫ້ປະຕິບັດວິທີການທີ່ຊຸມຊົນສາມາດຮັບເອົາໄດ້ເພື່ອໃຫ້ບັນລຸຂໍ້ຕົກລົງກັນກັບເຈົ້າຂອງໂຄງການ. ສິ່ງສຳຄັນກໍ່ຄືຕ້ອງນຳເອົາຄວາມຄິດເຫັນຂອງສະມາຊິກຊຸມຊົນທຸກຄົນທີ່ອາດຈະໄດ້ຮັບຜົນກະທົບຈາກໂຄງການໄປພິຈາລະນາ. ດ້ານໜຶ່ງອີກກໍ່ຕ້ອງໝັ້ນໃຈວ່າສະມາຊິກທຸກຄົນໃນຊຸມຊົນໃນນັ້ນກໍ່ແມ່ນລວມທັງແມ່ຍິງ ແລະ ຊາວໜຸ່ມໄດ້ມີສ່ວນຮ່ວມໃນຂະບວນການຕັດສິນໃຈຂອງຊຸມຊົນ. ທັງນີ້ກໍ່ຍ້ອນວ່າໂຄງການຂະໜາດໃຫຍ່ສົ່ງຜົນກະທົບໃຫ້ແຕ່ລະຄົນແຕກຕ່າງກັນ.

ໂດຍສ່ວນໃຫຍ່ແລ້ວມັກຈະພົບເຫັນເລື້ອຍໆວ່າ ຫຼາຍຊຸມຊົນໄດ້ຮັບຜົນສະທ້ອນຈາກໂຄງການດຽວ ສະນັ້ນ, ເຈົ້າຂອງໂຄງການຕ້ອງບອກໃຫ້ປະຊາຊົນໃນຊຸມຊົນໄດ້ຮັບຮູ້ວ່າເຂົາເຈົ້າໄດ້ມີການຕົກລົງຫຍັງແດ່ກັບຊຸມຊົນອື່ນທີ່ຢູ່ອ້ອມຂ້າງ? ຍ້ອນແນວນັ້ນຈຶ່ງເວົ້າໄດ້ວ່າການຊອກຮູ້ຊຸມຊົນອື່ນທີ່ໄດ້ຮັບຜົນກະທົບຈາກໂຄງການດຽວກັນໃນລັກສະນະຄ້າຍຄືກັນນັ້ນ ເປັນສິ່ງທີ່ເປັນປະໂຫຍດຕໍ່ຊຸມຊົນຂອງທ່ານເອງໂດຍຢ່າງໜ້ອຍກໍ່ຈະໄດ້ຮ່ວມປຶກສາຫາລືກັນເພື່ອເຈລະຈາກັບເຈົ້າຂອງໂຄງການ ຫຼື ລັດຖະບານ.

## ຄຳແນະນຳ 3:

ປະຊາຊົນບໍ່ຈຳເປັນຕ້ອງຕັດສິນໃຈຫຍັງໃນໄລຍະນີ້. ການຕັດສິນໃຈຄັ້ງທຳອິດຂອງທ່ານຄວນຈະແມ່ນຕັດສິນໃຈຊອກຫາຂໍ້ມູນຂ່າວສານຈາກເຈົ້າຂອງໂຄງການ.

ສ່ວນຫຼາຍແລ້ວ, ສະມາຊິກຊຸມຊົນສ່ວນໜຶ່ງອາດໃຫ້ການສະໜັບສະໜູນໂຄງການ, ແຕ່ອີກພາກສ່ວນໜຶ່ງ ອາດຈະຕ້ານການກໍ່ສ້າງໂຄງການ, ຜູ້ສ້າງໂຄງການມັກຈະພະຍາຍາມແບ່ງແຍກຊຸມຊົນອອກເປັນກຸ່ມຄືກຸ່ມສະໜັບສະໜູນ ແລະ ກຸ່ມຕໍ່ຕ້ານໂຄງການ. ສະນັ້ນ, ບັນຫານີ້ອາດຈະເຮັດໃຫ້ຊຸມຊົນຂາດຄວາມເຂັ້ມແຂງໃນການຕັດສິນໃຈລວມໝູ່ກ່ຽວກັບໂຄງການຊຶ່ງສາມາດເຮັດໃຫ້ເກີດຄວາມຕຶງຄຽດກົດດັນໃນຊຸມຊົນເອງ.

ມີຄວາມເປັນໄປໄດ້ທີ່ໂຄງການໜຶ່ງອາດສົ່ງຜົນກະທົບໃຫ້ແກ່ຫຼາຍຊຸມຊົນ, ແຕ່ວ່າຜົນກະທົບນີ້ອາດມີໜ້ອຍຫຼາຍແຕກຕ່າງກັນໄປ. ຖ້າເປັນແນວນີ້, ສຳຄັນທີ່ສຸດຊຸມຊົນຄວນພະຍາຍາມສ້າງວິທີການອັນໜຶ່ງອັນດຽວທີ່ເປັນເອກະພາບກັນກັບຊຸມຊົນອື່ນເພື່ອເຮັດໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການທັງຫຼາຍນັ້ນມີຄວາມເຂັ້ມແຂງໃນການເຈລະຈາຕໍ່ລອງກັບໂຄງການ.



# ບາດກ້າວທີ 4:

**ການສົນທະນາຂອງຊຸມຊົນກັບຜູ້ສ້າງໂຄງການ.**

ໃນຖານະສະມາຊິກຊຸມຊົນຜູ້ໜຶ່ງ, ທ່ານມີສິດໄດ້ຮັບການປຶກສາຫາລື ແລະ ດຳເນີນການເຈລະຈາກັບເຈົ້າຂອງໂຄງການ, ການໂອ້ລົມສົນທະນາກັບເຈົ້າຂອງໂຄງການບໍ່ໄດ້ໝາຍຄວາມວ່າທ່ານເຫັນດີນຳໂຄງການ, ທ່ານພຽງແຕ່ໃຊ້ສິດໃນການຂໍຮັບຂໍ້ມູນຂ່າວສານກ່ຽວກັບໂຄງການ.

ເຈົ້າຂອງໂຄງການຄວນປຶກສາຫາລືກັບປະຊາຊົນເພື່ອແຈ້ງຂໍ້ມູນຂ່າວສານກ່ຽວກັບໂຄງການໃຫ້ຊຸມຊົນໄດ້ຮັບຊາບ ແລະ ເຂົ້າໃຈ ແລະ ຂໍຄວາມເຫັນດີເຫັນພ້ອມຈາກຊຸມຊົນ ໃນໄລຍະຕົ້ນຂອງການວາງແຜນໂຄງການ ແລະ ກ່ອນການດຳເນີນວຽກງານໃນແຕ່ລະຂັ້ນຕອນໃໝ່ຂອງໂຄງການ.

ໝາຍຄວາມວ່າທ່ານຕົກລົງເຫັນດີໃນບາດກ້າວທຳອິດ, ເຈົ້າຂອງໂຄງການຕ້ອງແຈ້ງໃຫ້ທ່ານຊາບ ແລະ ເຂົ້າໃຈໃນການດຳເນີນງານຂອງໂຄງການໃນບາດກ້າວຕໍ່ໄປເພື່ອຂໍຄວາມເຫັນດີເຫັນພ້ອມຈາກທ່ານອີກ. ຖ້າຈະມີການຍົກຍ້າຍເພື່ອໄປຕັ້ງຖິ່ນຖານໃໝ່ໃຫ້ແກ່ຊຸມຊົນ, ເຈົ້າຂອງໂຄງການຈະຕ້ອງປຶກສາຫາລື ແລະ ເຈລະຈາກັບເນື້ອໃນເງື່ອນໄຂການຕັ້ງຖິ່ນຖານໃໝ່ກັບຊຸມຊົນກ່ອນທີ່ຈະມີການຕັດສິນໃຈ.

ການກໍ່ສ້າງໂຄງການພັດທະນາຂະໜາດໃຫຍ່ ເວລາໃດກໍມັກຈະນຳເອົາຜົນປະໂຫຍດດ້ານການເງິນຈຳນວນມະຫາສານ ມາໃຫ້ຜູ້ລົງທຶນສະເໝີ. ແຕ່ໜ້າເສຍດາຍ, ຊຸມຊົນທ້ອງຖິ່ນມັກຈະເປັນຜູ້ໂຊກຮ້າຍບໍ່ຄ່ອຍມີໂອກາດໄດ້ຮັບສ່ວນແບ່ງດ້ານການເງິນ ຫຼື ຜົນປະໂຫຍດດ້ານອື່ນຈາກເຈົ້າຂອງໂຄງການ. ສະນັ້ນ, ເພື່ອຮັບປະກັນໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການໄດ້ຮັບຜົນປະໂຫຍດຈາກໂຄງການ. ເຈົ້າຂອງໂຄງການຮ່ວມກັບຊຸມຊົນຄວນກຳນົດກົນໄກກ່ຽວກັບການແບ່ງປັນຜົນປະໂຫຍດຂຶ້ນໄວ້ເປັນບ່ອນອີງ. ຕົວຢ່າງ: ໂຄງການມັກຈະໃຫ້ຊຸມຊົນເປັນຜູ້ເລືອກວ່າຜົນປະໂຫຍດອັນໃດທີ່ຊຸມຊົນຕ້ອງການ. ອັນນີ້ກໍແມ່ນທ່າແຮງອັນໜຶ່ງ ທີ່ຈະຊ່ວຍປັບປຸງການດຳລົງຊີວິດຂອງປະຊາຊົນ ແລະ ທັງເປັນການສະແດງໃຫ້ເຫັນວິທີການທີ່ໂຄງການສາມາດເພີ່ມຄຸນຄ່າໃຫ້ແກ່ຊຸມຊົນ.

**ສິ່ງສຳຄັນກໍ່ຄືສະມາຊິກທັງໝົດໃນຊຸມຊົນຂອງທ່ານໄດ້ເຂົ້າຮ່ວມເຈລະຈາດ້ານຜົນປະໂຫຍດ. ບໍ່ແມ່ນຈະໃຫ້ແຕ່ຜູ້ນຳບາງຄົນ ຫຼື "ຜູ້ມີອິດທິພົນ" ໃນຊຸມຊົນທີ່ອາດຈະສ້າງຜົນປະໂຫຍດສ່ວນຕົວແຕ່ເປັນການສູນເສຍຜົນປະໂຫຍດສ່ວນລວມຂອງຊຸມຊົນ. ສະມາຊິກທັງໝົດໃນຊຸມຊົນ ຄວນລະມັດລະວັງກັບ "ການສວຍໃຊ້ອິດທິພົນເພື່ອຜົນປະໂຫຍດສ່ວນຕົວ" ໃນຂະບວນການເຈລະຈາ ກັບຜູ້ສ້າງໂຄງການຂອງຜູ້ມີອິດທິພົນໃນຊຸມຊົນ.**

### ບາງຕົວຢ່າງຂອງຜົນປະໂຫຍດທີ່ປະຊາຊົນສາມາດເຈລະຈາເພື່ອຊຸມຊົນຂອງຕົນ ມີດັ່ງນີ້:

- ສະມາຊິກຂອງຊຸມຊົນມີວຽກເຮັດວານທຳຫຼາຍຂຶ້ນ.
- ມີການຝຶກອົບຮົມຍົກລະດັບ ແລະ ການມອບໜ້າທີ່ຕຳແໜ່ງ.
- ມີໂຮງຮຽນ ແລະ ສຸກສາສາລາຫຼັງໃໝ່.
- ມີສິດທິພິເສດໃນການເຂົ້າເຖິງ ແລະ ການນຳໃຊ້ແຫຼ່ງຊັບພະຍາກອນທຳມະຊາດໃນຂົງເຂດຂອງໂຄງການສຳລັບຊຸມຊົນທີ່ຖືກຜົນກະທົບ.
- ມີສັນຍາກັບເຈົ້າຂອງໂຄງການວ່າດ້ວຍການຈົ່ງດິນບາງຕອນໄວ້ເປັນດິນສະຫງວນຂອງຊຸມຊົນໂດຍບໍ່ໃຫ້ຜູ້ໃດແຕະຕ້ອງ. ຕົວຢ່າງ: ເຂດທີ່ມີຄຸນຄ່າທາງດ້ານວັດທະນະທຳ ແລະ
- ປະການສຸດທ້າຍກໍ່ຄືມີການແບ່ງປັນລາຍໄດ້ຈາກໂຄງການ.

### ຄຳແນະນຳ 4:

ເຈົ້າຂອງໂຄງການບໍ່ຄວນບັງຄັບໃຫ້ປະຊາຊົນເຂົ້າຮ່ວມການເຈລະຈາກ່ອນທີ່ປະຊາຊົນຈະມີຄວາມພ້ອມ. ຜູ້ເປັນເຈົ້າຂອງໂຄງການຕ້ອງໃຫ້ເວລາປະຊາຊົນຢ່າງພຽງພໍເພື່ອຄົ້ນຄວ້າພິຈາລະນາຂໍ້ມູນຂ່າວສານທີ່ໄດ້ຮັບ, ມີເວລາໃນການຕັດສິນໃຈວ່າເຂົາເຈົ້າຕ້ອງການເຈລະຈາກັບເຈົ້າຂອງໂຄງການວິທີໃດ ແລະ ກ້າວໄປເຖິງການຕັດສິນໃຈໃນຖານະທີ່ເປັນຕົວແທນຂອງຊຸມຊົນ.

### ຄຳແນະນຳ 5:

ຖ້າການກໍ່ສ້າງຂອງໂຄງການໄດ້ເລີ່ມຕົ້ນໂດຍປາສະຈາກການມີສ່ວນຮ່ວມຂອງຊຸມຊົນ ຫຼື ປາສະຈາກຄວາມເຫັນດີເຫັນພ້ອມຂອງປະຊາຊົນ, ປະຊາຊົນຕ້ອງບອກໃຫ້ເຈົ້າຂອງໂຄງການຮັບຊາບວ່າໂຄງການຂອງພວກເຂົາເຈົ້ານັ້ນຍັງບໍ່ທັນໄດ້ຮັບການຮັບຮອງຈາກປະຊາຊົນຢ່າງຖືກຕ້ອງຕາມກົດໝາຍ. ປະຊາຊົນສາມາດລະງັບການອອກຄຳເຫັນ ຫຼື ສາມາດສະເໜີໃຫ້ຢຸດຕິການກໍ່ສ້າງໄວ້ກ່ອນແລ້ວຢືນຢັນຄຳຂາດວ່າເຈົ້າຂອງໂຄງການຈະດຳເນີນໂຄງການຕໍ່ໄປໄດ້ກໍ່ຕໍ່ເມື່ອວ່າ ຊຸມຊົນໄດ້ມອບຄວາມເປັນອິດສະຫຼະ, ຄວາມພ້ອມ ແລະ ຄວາມເຫັນດີເຫັນພ້ອມໃຫ້ເຈົ້າຂອງໂຄງການກ່ອນພ້ອມທັງໄດ້ມີການເຈລະຈາດ້ານຜົນປະໂຫຍດຂອງຊຸມຊົນ ຫຼື ການປ່ຽນແປງວິທີການດຳເນີນໂຄງການ.



# ບາດກ້າວທີ 5:

**ການສະແຫວງຫາຄໍາແນະຢ່າງເປັນເອກະລາດ.**

ການທີ່ຊຸມຊົນຈະໄປເຈລະຈາກັບເຈົ້າຂອງໂຄງການນັ້ນ ມັກຈະພົບຄວາມຫຍຸ້ງຍາກເພາະວ່າ ເຈົ້າຂອງໂຄງການພະຍາຍາມຫຼີກລ່ຽງບໍ່ໃຫ້ມີສ່ວນຮ່ວມຂອງຊຸມຊົນ. ບັນຫານີ້ມີຄວາມສະຫຼັບຊັບຊ້ອນປະຊາຊົນມີສິດທີ່ຈະໄດ້ຮັບຄໍາແນະນໍາທາງດ້ານກົດໝາຍ ແລະ ດ້ານເຕັກນິກຢ່າງເປັນເອກະລາດເພື່ອຊ່ວຍໃຫ້ປະຊາຊົນໄດ້ເຂົ້າໃຈປະສິດທິຜົນຂອງໂຄງການ. ຕົວຢ່າງ: ບໍລິສັດແຈ້ງໃຫ້ປະຊາຊົນຮູ້ວ່າພວກເຂົາກໍາລັງຈະໃຊ້ສານໂລຫະໜັກທີ່ເປັນພິດ (Mecury) ໃນກໍລະນີປະຊາຊົນບໍ່ເຄີຍໄດ້ຍິນຊື່ສານທີ່ເປັນພິດຊະນິດນີ້ມາກ່ອນ ຫຼື ບໍ່ຮູ້ສານປະເພດນີ້ ກໍຈະຕ້ອງໄດ້ຂໍຄໍາແນະນໍາຈາກຜູ້ຊ່ຽວຊານດ້ານວິທະຍາສາດ.

ຈົ່ງຈໍາໄວ້ວ່າການຕັດສິນໃຈຂອງທ່ານຄວນເປັນການຕັດສິນບົນພື້ນຖານການຕັດສິນໃຈທີ່ໄດ້ຮັບຮູ້ແຈ້ງຂໍ້ມູນຂ່າວສານຈາກເຈົ້າຂອງໂຄງການລ່ວງໜ້າ. ສິ່ງໜຶ່ງອີກທີ່ຢູ່ພາຍໃຕ້ຫຼັກການວ່າດ້ວຍສິດ ແລະ ຄວາມເປັນອິດສະຫຼະໃນການຕັດສິນໃຈຂອງຊຸມຊົນທ້ອງຖິ່ນນັ້ນຕ້ອງເປັນຄວາມເຫັນດີເຫັນພ້ອມທີ່ເກີດຈາກການໄດ້ຮັບແຈ້ງຂໍ້ມູນຂ່າວສານລ່ວງໜ້າ.ສໍາລັບສະມາຊິກຂອງຊຸມຊົນທີ່ໄດ້ຮັບຜົນກະທົບຈາກໂຄງການນັ້ນ,ການມີສ່ວນຮ່ວມໃນການປຶກສາຫາລື ແລະ ການເຈລະຈາໃນຂະບວນການຕັດສິນບັນຫາຄວນຢູ່ບົນພື້ນຖານການໄດ້ຮັບແຈ້ງຂໍ້ມູນຂ່າວສານລ່ວງໜ້າກ່ຽວກັບປະເດັນບັນຫາທີ່ຈະຖືກນໍາມາສົນທະນາ ແລະ ເຈລະຈານັ້ນທຸກຄັ້ງ.

ສິ່ງສໍາຄັນອີກອັນໜຶ່ງ, ບໍ່ຄວນໃຫ້ປະຊາຊົນອີງໃສ່ແຕ່ຂໍ້ມູນຂ່າວສານ ທີ່ໄດ້ຮັບແຈ້ງຈາກເຈົ້າຂອງໂຄງການເທົ່ານັ້ນ, ເພາະວ່າເຈົ້າຂອງໂຄງການມັກຈະພະຍາຍາມສ້າງໂຄງການໃຫ້ດຶງດູດຈິດໃຈຂອງປະຊາຊົນ ເພື່ອວ່າຈະໄດ້ຮັບຄວາມເຫັນດີເຫັນພ້ອມຈາກປະຊາຊົນຫຼາຍຂຶ້ນ ສະນັ້ນ, ຂໍ້ມູນຂ່າວສານທີ່ໄດ້ຈາກແຫຼ່ງອື່ນຈະເຮັດໃຫ້ປະຊາຊົນມີຄວາມໝັ້ນໃຈວ່າເຂົາເຈົ້າໄດ້ເຂົ້າໃຈຜົນກະທົບຂອງໂຄງການຢ່າງເຕັມສ່ວນທັງໃນເວລາສະເພາະໜ້າ ແລະ ຍາວນານພ້ອມທັງເຂົ້າໃຈວ່າສິດທິຂອງປະຊາຊົນໃນຊຸມຊົນນັ້ນແມ່ນອັນໃດແທ້.

*ຂໍ້ຄວນຈໍາ: ສິ່ງສໍາຄັນຕ້ອງຊອກຮູ້ໃຫ້ໄດ້ວ່າກົດໝາຍແຫ່ງຊາດຂອງຕົນນັ້ນ ໄດ້ມີການປົກປ້ອງສິດທິຂອງປະຊາຊົນໃນດ້ານສິດທິ ແລະ ຄວາມເປັນອິດສະຫຼະໃນການຕັດສິນໃຈຂອງຊຸມຊົນ ຫຼື ມີຂະບວນການທີ່ຄ້າຍຄືກັນນີ້ບໍ່? ຄໍາແນະນໍາທີ່ເປັນເອກະລາດສາມາດຊ່ວຍເຫຼືອປະຊາຊົນໃນບັນຫາເຫຼົ່ານີ້. ສໍາລັບຂໍ້ມູນເພີ່ມເຕີມກ່ຽວກັບວ່າປະຊາຊົນສາມາດໄດ້ຮັບຄໍາແນະນໍາທີ່ເປັນເອກະລາດຈາກໃສແດ່ນັ້ນ ຂໍໃຫ້ເບິ່ງຢູ່ໜ້າທີ 28.*

ເຖິງວ່າຈະມີກົດໝາຍແຫ່ງຊາດວ່າດ້ວຍການປົກປ້ອງສິດທິຊຸມຊົນ ຕາມຫຼັກການກ່ຽວກັບສິດ ແລະ ຄວາມເປັນອິດສະຫຼະໃນການຕັດສິນໃຈຂອງປະຊາຊົນບັນດາເຜົ່າ(FPIC), ແຕ່ກໍ່ຍັງມີຫຼາຍຢ່າງທີ່ດຳເນີນໄປ ໃນທາງທີ່ບໍ່ຖືກຕ້ອງກັບກົດໝາຍ. ການສໍ້ລາດບັງຫຼວງ, ຄວາມບໍ່ເຂັ້ມແຂງໃນການບັງຄັບໃຊ້ກົດໝາຍ, ຫຼື ການຂາດຄວາມເປັນເອກະລາດໃນອົງການຂອງລັດຖະບານທີ່ຮັບຜິດຊອບການປະຕິບັດສິດ ແລະ ຄວາມ ເປັນອິດສະຫຼະຂອງປະຊາຊົນບັນດາເຜົ່າໃນການຕັດສິນໃຈຕາມທີ່ກົດໝາຍໄດ້ກຳນົດໄວ້ນັ້ນສາມາດສ້າງບັນຫາໃຫ້ແກ່ຊຸມຊົນໃນການທວງສິດທິ ແລະ ຄວາມເປັນອິດສະຫຼະໃນການຕັດສິນໃຈຂອງຕົນເອງ (FPIC).



## ບາດກ້າວທີ 6:

### ການຕັດສິນໃຈໃນຂັ້ນຊຸມຊົນ.

ສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈ ຂອງປະຊາຊົນບັນດາເຜົ່າແມ່ນສິດທິລວມໝູ່. ເພາະສະນັ້ນ, ຊຸມຊົນຂອງທ່ານຈະຕ້ອງຮ່ວມກັນຕັດສິນໃຈໃຫ້ສອດຄ່ອງກັບຂະບວນການຕັດສິນໃຈທີ່ປະຊາຊົນໃນທ້ອງຖິ່ນເຄີຍປະຕິບັດສືບທອດກັນມາ.

ຖ້າປະຊາຊົນຈະຕັດສິນໃຈເວົ້າວ່າ "ເຫັນດີ" ກັບໂຄງການ, ປະຊາຊົນກໍຄວນມີຄວາມໝັ້ນໃຈວ່າການຕົກລົງທີ່ຕົນໃຫ້ກັບເຈົ້າຂອງໂຄງການໄປນັ້ນໄດ້ຮັບການບັນທຶກເປັນລາຍລັກອັກສອນຄັກແນ່. ເອກະສານຂໍ້ຕົກລົງທີ່ວ່ານີ້ ອາດຈະຂຽນເປັນພາສາປະຈໍາຊາດຂອງປະຊາຊົນກໍໄດ້ ແລະເອກະສານ ຫຼື ສັນຍາດັ່ງກ່າວຕ້ອງເປັນຂໍ້ຜູກພັນທາງກົດໝາຍ.

ຂະບວນການປະຕິບັດວຽກງານໃນລັກສະນະນີ້ອາດມີຄວາມຫຍຸ້ງຍາກຫຼາຍ ແລະ ຄວາມເຂົ້າໃຈຕໍ່ສັນຍາໂຄງການ, ການອະນຸມັດຂອງລັດຖະບານນັບທັງເອກະສານທີ່ມີລັກສະນະເປັນກົດໝາຍ ແມ່ນມີຄວາມສະລັບຊັບຊ້ອນຫຼາຍ. ສະນັ້ນ, ຈຶ່ງຂໍໃຫ້ຄໍາແນະນໍາເພີ່ມຕື່ມວ່າໃຫ້ປະຊາຊົນຂໍຮ້ອງຄວາມຊ່ວຍເຫຼືອຈາກອົງການຈັດຕັ້ງ ທີ່ບໍ່ສັງກັດລັດຖະບານ ຫຼື ພາກສ່ວນອື່ນໆອີກ ທີ່ມີຄວາມຊ່ຽວຊານກ່ຽວກັບດ້ານນີ້ເພື່ອຊ່ວຍເຫຼືອປະຊາຊົນໃຫ້ເຂົ້າໃຈໃນສັນຍາ ແລະ ເອກະສານອື່ນໆ.

ຖ້າວ່າຊຸມຊົນໄດ້ໃຫ້ຄວາມເຫັນດີເຫັນພ້ອມຂອງຕົນແກ່ໂຄງການແລ້ວ, ຊຸມຊົນກໍມີສິດທີ່ຈະເລືອກເຂົ້າຮ່ວມ ໃນສັນຍາວ່າດ້ວຍຜົນປະໂຫຍດຈາກການໄດ້ຮັບຜົນກະທົບຈາກໂຄງການ ຫຼື ຜົນປະໂຫຍດອື່ນໆທີ່ຄ້າຍຄືກັນນີ້ຈາກເຈົ້າຂອງໂຄງການ. ນີ້ແມ່ນສັນຍາທີ່ມີຂໍ້ຜູກພັນທາງກົດໝາຍທີ່ບັນທຶກຂໍ້ຕົກລົງລະຫວ່າງຊຸມຊົນກັບເຈົ້າຂອງໂຄງການ. ສັນຍາດັ່ງກ່າວນີ້ໄດ້ບັນທຶກເອົາເງື່ອນໄຂຕ່າງໆທີ່ເຈົ້າຂອງໂຄງການຕ້ອງປະຕິບັດຕາມ ແລະ ຕ້ອງປະຕິບັດຕາມສັນຍາໃນເວລາໃດ.

*ຂໍ້ທີ່ຄວນຈໍາ: ຖ້າສະມາຊິກຂອງຊຸມຊົນຫາກເຊື່ອວ່າໂຄງການຈະບໍ່ປະຕິບັດໃນທາງບວກກັບຊຸມຊົນ, ປະຊາຊົນກໍຄວນເວົ້າວ່າ "ບໍ່ເຫັນດີ" ຫຼື ໃຊ້ຄໍາເວົ້າອື່ນໃນລັກສະນະທີ່ບໍ່ໃຫ້ຄວາມເຫັນດີເຫັນພ້ອມກັບໂຄງການ. ໂຄງການຕ້ອງໄດ້ຮັບການປະຕິບັດພາຍໃຕ້ເງື່ອນໄຂດຽວຄືຄວາມເຫັນດີເຫັນພ້ອມຂອງປະຊາຊົນບັນດາເຜົ່າໄດ້ຖືກຮັບຮອງຢ່າງເປັນທາງການຈາກລັດຖະບານແລະເຈົ້າຂອງໂຄງການເທົ່ານັ້ນ. ສໍາລັບຊຸມຊົນທີ່ບໍ່ແມ່ນຄົນຊົນເຜົ່າທີ່ໄດ້ຮັບຜົນກະທົບຈາກໂຄງການນັ້ນ, ຖ້າເຂົາເຈົ້າເວົ້າວ່າ "ບໍ່ເຫັນດີ" ກັບໂຄງການ, ຄໍາເວົ້າຂອງພວກເຂົາເຈົ້າກໍຕ້ອງຖືກນໍາໄປພິຈາລະນາເໝືອນກັນ.*

ຜູ້ສ້າງໂຄງການບາງຄົນ ໄດ້ພະຍາຍາມເຮັດໃຫ້ຊຸມຊົນເຫັນດີເຫັນພ້ອມນຳໂຄງການດ້ວຍສິ່ງປີ້ນເປົາ ແລະ ບັງຄັບເຈົ້າຂອງທີ່ດິນ ແລະ ຜູ້ຕາງໜ້າຂອງພວກເຂົາເຊັນເອກະສານ.
ຜູ້ສ້າງໂຄງການບາງຄົນໄດ້ພະຍາຍາມເຮັດໃຫ້ຊຸມຊົນເຫັນດີເຫັນພ້ອມນຳໂຄງການດ້ວຍວິທີການສ້າງຂະບວນການຕັດສິນໃຈຂອງຊຸມຊົນຂຶ້ນມາດ້ວຍຕົນເອງ. ຂະບວນການອັນນີ້ ບໍ່ໄດ້ຮັບເອົາແບບແຜນການຕັດສິນໃຈຕາມປະເພນີຊົນເຜົ່າຂອງຊຸມຊົນ ຫຼື ຕົວແທນຂອງຊຸມຊົນທີ່ຖືກຕ້ອງຕາມກົດໝາຍແຕ່ຢ່າງໃດ ແລະ ມັນເປັນການອອກແບບມາເພື່ອໃຫ້ໄດ້ຄຳຕອບວ່າ "ເຫັນດີ" ຊຶ່ງເປັນຂະບວນການປອມແປງ.

*ຂໍ້ທີ່ຄວນຈຳ: ເຈົ້າຂອງໂຄງການຈະຕ້ອງບໍ່ກົດດັນ, ຂົ່ມຂູ່ ຫຼື ບັງຄັບປະຊາຊົນດ້ວຍວິທີການໃດໆເພື່ອໃຫ້ໄດ້ຄຳຕັດສິນໃຈ ຫຼື ຄວາມເຫັນດີເຫັນພ້ອມຂອງເຂົາເຈົ້າ ໃຫ້ດຳເນີນໂຄງການ. ຂໍຍົກຕົວຢ່າງໃຫ້ເຫັນວ່າ ເຈົ້າຂອງໂຄງການເຄີຍສ້າງຂະບວນການທີ່ມີຄວາມຫຍຸ້ງຍາກ ໃນການປະຕິບັດສັນຍາດ້ວຍວິທີໃດແດ່ດັ່ງນີ້:*

- *ບໍ່ໃຫ້ປະຊາຊົນໄດ້ເຂົ້າຮ່ວມ ໃນຂັ້ນຕອນຕ່າງໆຂອງການປະເມີນຜົນກະທົບເບື້ອງຕົ້ນ,*
- *ບັງຄັບຊຸມຊົນໃຫ້ເຊັນສັນຍາ ທັງໆທີ່ຮູ້ວ່າປະຊາຊົນບໍ່ເຂົ້າໃຈເຖິງຜົນກະທົບຂອງໂຄງການ*
- *ໃຊ້ວິທີການເຈລະຈາ ຫຼື ສົນທະນາກັບບຸກຄົນຈຳນວນໜຶ່ງ ທີ່ບໍ່ເປັນຕົວແທນໃຫ້ແກ່ຄວາມຄິດຄວາມເຫັນຂອງຊຸມຊົນ.*



## ບາດກ້າວທີ 7:

**ການດຳເນີນການພົວພັນກັບຜູ້ສ້າງໂຄງການ.**

ສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງຊຸມຊົນແມ່ນຂະບວນການຕໍ່ເນື່ອງ. ຍ້ອນແນວນັ້ນ, ໂຄງການພັດທະນາຂະໜາດໃຫຍ່ຕ້ອງໃຊ້ເວລາຫຼາຍປີຈຶ່ງສາມາດເລີ່ມຕົ້ນໂຄງການໄດ້. ເມື່ອເປັນແນວນັ້ນຜົນສະທ້ອນຂອງໂຄງການທີ່ມີຕໍ່ຊຸມຊົນກໍ່ຫຼາຍປີ ຫຼື ອາດແກ່ຍາວຮອດຫຼາຍເຊັ່ນຄົນກໍ່ເປັນໄດ້. ເຈົ້າຂອງໂຄງການຕ້ອງສ້າງຄວາມໝັ້ນໃຈໃຫ້ກັບຊຸມຊົນວ່າໂຄງການຈະແຈ້ງຜົນຄວາມຄືບໜ້າຂອງໂຄງການໃຫ້ຊຸມຊົນຮັບຊາບຢູ່ຕະຫຼອດເວລາພ້ອມດຽວກັນນັ້ນໂຄງການກໍ່ຕ້ອງໃຫ້ໂອກາດແກ່ປະຊາຊົນໄດ້ຊັກຖາມຄຳຖາມຕ່າງໆ ຫຼື ຍົກເອົາບັນຫາທີ່ກ່ຽວຂ້ອງອື່ນຂຶ້ນມາສົນທະນາກັບເຈົ້າຂອງໂຄງການໄດ້. ສິດທິຂອງຊຸມຊົນໃນດ້ານນີ້ ຕ້ອງໄດ້ຮັບຄວາມເຄົາລົບຕະຫຼອດໄລຍະເວລາຂອງໂຄງການ.

ຢູ່ໃນເອກະສານຊ້ອນທ້າຍທີ 3 ຢູ່ໜ້າທີ່ 33 ໄດ້ສະແດງໃຫ້ເຫັນໂຄງສ້າງລວມຂອງໄລຍະການປະຕິບັດໂຄງການຂະໜາດໃຫຍ່.ໃນນັ້ນແມ່ນໄດ້ເນັ້ນໜັກເຖິງ ຄວາມສຳຄັນຂອງຄວາມເຂົ້າໃຈຕໍ່ກິດຈະກຳຕ່າງໆທີ່ແຕກຕ່າງກັນ. ຊຶ່ງສາມາດເກີດຂຶ້ນໄດ້ໃນແຕ່ລະຂັ້ນຕອນຂອງການປະຕິບັດໂຄງການ ແລະ ສະແດງໃຫ້ເຫັນວ່າ ແມ່ນຫຍັງທີ່ເຈົ້າຂອງໂຄງການຄວນປະຕິບັດ ເພື່ອໃຫ້ຊຸມຊົນໄດ້ເຂົ້າຮ່ວມໂຄງການໃນແຕ່ລະຂັ້ນຕອນນັ້ນໆ.

*ຂໍ້ທີ່ຄວນຈຳ: "ສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈ ຂອງປະຊາຊົນບັນດາເຜົ່າ ບໍ່ແມ່ນຂະບວນການປະຕິບັດຄັ້ງດຽວແລ້ວກໍ່ແລ້ວເລີຍ". ມັນແມ່ນຂະບວນການປະຕິບັດແບບຕໍ່ເນື່ອງ.ໝາຍຄວາມວ່າການສົນທະນາ ແລະ ການຕົກລົງກັນຢ່າງເປັນປົກກະຕິລະຫວ່າງເຈົ້າຂອງໂຄງການກັບຊຸມຊົນທີ່ໄດ້ຮັບຜົນກະທົບແມ່ນການປະຕິບັດທີ່ດີ.*

*ຖ້າຫາກປະຊາຊົນຫຼືຕົວແທນຊຸມຊົນໄດ້ເວົ້າວ່າ "ເຫັນດີ" ຫຼື "ບໍ່ເຫັນດີ" ກັບໂຄງການ, ຕົວແທນຊຸມຊົນກໍຕ້ອງໄດ້ສືບຕໍ່ດຳເນີນການເຈລະຈາໃນນາມຊຸມຊົນຂອງຕົນ. ຜູ້ຕ່າງໜ້າຊຸມຊົນຕ້ອງໝັ້ນໃຈວ່າສະມາຊິກໃນທົ່ວຊຸມຊົນຕ້ອງໄດ້ຮັບຂໍ້ມູນຂ່າວສານລວມໝູ່ຢ່າງເຕັມສ່ວນ.*

## ຄຳແນະນຳ 6:

ການຂໍຮ້ອງໃຫ້ອົງການຈັດຕັ້ງເອກະລາດຊ່ວຍໃນການຕິດຕາມກວດກາໂຄງການນັ້ນສາມາດເຮັດໃຫ້ເຈົ້າຂອງໂຄງການໃຫ້ຄວາມເອົາໃຈໃສ່ໃນບັນຫາກ່ຽວກັບຜົນກະທົບຈາກໂຄງການ ແລະ ປະຕິບັດໜ້າທີ່ ແລະ ພັນທະເປັນໄປຕາມລະບຽບກົດໝາຍໄດ້.

## ຄຳແນະນຳ 7:

ສິ່ງທີ່ສຳຄັນອີກອັນໜຶ່ງ ແມ່ນການທຳຄວາມເຂົ້າໃຈ ແລະ ການເຈລະຈາກ່ຽວກັບແຜນຍຸດທະສາດທີ່ມີຢູ່ໃນປະຈຸບັນ ໃຫ້ເລີກເຊິ່ງກ່ອນໂຄງການຈະໝົດສັນຍາ. ໃນນີ້ກໍ່ແມ່ນລວມທັງການເຮັດໃຫ້ຊຸມຊົນ ມີນ້ຳສະອາດຕະຫຼອດເວລາ, ການສອັມແປງສິ່ງອຳນວຍຄວາມສະດວກ ແລະ ການຝຶກອົບຮົມຄືນເພື່ອໂອກາດໃນການມີວຽກເຮັດວຽກທຳ.

ຜູ້ຕ່າງໜ້າຊຸມຊົນຍັງມີຄວາມຈຳເປັນຕ້ອງຕິດຕາມການພັດທະນາໂຄງການວ່າໂຄງການໄດ້ດຳເນີນໄປຕາມແຜນທີ່ໄດ້ຮັບຮອງເອົາແລ້ວນັ້ນແທ້ຫຼືບໍ່? ການຕິດຕາມດັ່ງກ່າວນີ້ກໍຍັງມີຄວາມສຳຄັນຕໍ່ຊຸມຊົນໃນປະເດັນທີ່ວ່າບໍລິສັດ ຫຼື ລັດຖະບານຍັງປະຕິບັດຕາມຄວາມໝັ້ນໝາຍຂອງຕົນທີ່ໄດ້ກຳນົດໄວ້ໃນສັນຍາເບື້ອງຕົ້ນຢ່າງສະເໝີຕົ້ນສະເໝີປາຍຫຼືບໍ່? ວິທີການອີກທາງໜຶ່ງທີ່ຈະປະຕິບັດວຽກງານນີ້ໄດ້ກໍ່ຄືຕ້ອງເຈລະຈາກ່ຽວກັບຜົນສຳເລັດສະເພາະດ້ານຕ່າງໆ ແລະ ເງື່ອນໄຂຕ່າງໆຂອງໂຄງການ. ບັນຫາຕ່າງໆເຫຼົ່ານີ້ຈະຕ້ອງໄດ້ຮັບການບັນທຶກເປັນລາຍລັກອັກສອນມີຂອບເຂດເວລາທີ່ແນ່ນອນເພື່ອຕົກລົງກັນໄວ້.

ດ້ານໜຶ່ງອີກກໍ່ຄືຜູ້ສ້າງໂຄງການອາດມີການປ່ຽນແປງຕະຫຼອດໄລຍະຂອງໂຄງການ, ເຈົ້າຂອງໂຄງການຄົນໃໝ່ກໍ່ຕ້ອງສືບຕໍ່ຮັບຮູ້ແລະປະຕິບັດຕາມສັນຍາທີ່ເຈົ້າຂອງໂຄງການຄົນຜ່ານມາໄດ້ຕົກລົງກັບຊຸມຊົນໄວ້ໃນເບື້ອງຕົ້ນ. ເຖິງຢ່າງໃດກໍຕາມ, ປະຊາຊົນກໍຄວນຊອກຫາຄຳແນະນຳທີ່ເປັນເອກະລາດເພື່ອໃຫ້ເຂົ້າໃຈເລິກເຊິ່ງຕື່ມວ່າເຈົ້າຂອງໂຄງການຄົນໃໝ່ປະຕິບັດຕາມສັນຍາທີ່ໄດ້ເຊັນໄວ້ໃນເມື່ອກ່ອນນັ້ນແທ້ ຫຼື ບໍ່? ນີ້ຄືເຫດຜົນສ່ວນໜຶ່ງທີ່ວ່າເປັນຫຍັງຈຶ່ງຕ້ອງບັນທຶກເອົາການຕັດສິນໃຈຂອງຊຸມຊົນກ່ຽວກັບໂຄງການ ແລະ ຜົນປະໂຫຍດທີ່ໄດ້ຈາກໂຄງການໂດຍຜ່ານການເຈລະຈານັ້ນໄວ້ໃນຂໍ້ຕົກລົງທີ່ເປັນລາຍລັກອັກສອນ. ນອກຈາກນີ້ແລ້ວ ປະຊາຊົນອາດມີຄວາມຕ້ອງການຢາກເຈລະຈາກັບຫົວໜ້າໂຄງການຜູ້ໃໝ່ຕື່ມເພື່ອປັບປຸງຜົນປະໂຫຍດຂອງຊຸມຊົນ.

ນອກຈາກນັ້ນຊຸມຊົນອາດຍັງຕ້ອງການສ້າງຕັ້ງສະພາບໍລິຫານປະຈຳຊຸມຊົນທີ່ປະກອບດ້ວຍຕົວແທນຊຸມຊົນ ແລະ ເຈົ້າຂອງໂຄງການເພື່ອເຮັດໜ້າທີ່ຕິດຕາມ ແລະ ປະສານງານໂຄງການໃຫ້ເປັນປົກກະຕິ ແລະ ຕໍ່ເນື່ອງ. ສະພາບດັ່ງກ່າວນີ້ອາດຈະເຮັດໜ້າທີ່ຮັບຜິດຊອບຄຸ້ມຄອງບັນຫາຕ່າງໆ ຫຼື ແກ້ໄຂຂໍ້ຂ້ອງໃຈຂອງສະມາຊິກໃນຊຸມຊົນທີ່ອາດມີຂຶ້ນໃນເວລາການດຳເນີນໂຄງການ.

**ຂັ້ນຕອນຕ່າງໆທີ່ໄດ້ອະທິບາຍມາຂ້າງເທິງນັ້ນແມ່ນໄດ້ອອກແບບໄວ້ໃນການໃຫ້ຄວາມຊ່ວຍເຫຼືອແກ່ທ່ານ ແລະ ຊຸມຊົນຂອງທ່ານໃນການຮຽກຮ້ອງສິດຂອງທ່ານຕໍ່ກັບ ສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການ ການຕັດສິນໃຈຂອງປະຊາຊົນບັນດາເຜົ່າ, ສິດໃນການໄດ້ຮັບການປຶກສາຫາລື ແລະ ມີສິດໃນການເຈລະຈາຕໍ່ລອງໃນຂັ້ນຕອນການຕັດສິນໃຈທີ່ອາດຈະສົ່ງຜົນກະທົບມາເຖິງທ່ານ**

## ປະຊາຊົນສາມາດໄດ້ຮັບການສະໜັບສະໜູນ ແລະ ຂໍ້ມູນເພີ່ມຕື່ມຈາກໃສແດ່ ? ມີອົງການຈັດຕັ້ງໃດແດ່ອີກທີ່ກໍາລັງປະຕິບັດໜ້າທີ່ກ່ຽວກັບຊັບພະຍາກອນທໍາມະຊາດຢູ່ໃນຂະນະນີ້?

ປະຊາຊົນຈະເຮັດແນວໃດຖ້າລັດຖະບານ ຫຼື ເຈົ້າຂອງໂຄງການບໍ່ໃຫ້ຄວາມສົນໃຈແກ່ເຂົາເຈົ້າ? ເຖິງແມ່ນວ່າປະຊາຊົນກໍຄືຊຸມຊົນພະຍາຍາມຕິດຕາມຂັ້ນຕອນຕ່າງໆຂອງການປະຕິບັດໂຄງການ, ແຕ່ເຈົ້າຂອງໂຄງການກໍຍັງເມີນເສີຍຕໍ່ປະຊາຊົນ ແລະ ສືບຕໍ່ດໍາເນີນໂຄງການຕາມລໍາພັງໃຈຂອງຕົນຢູ່? ຖ້າມີກໍລະນີນີ້ເກີດຂຶ້ນກັບປະຊາຊົນສິ່ງທີ່ຄວນປະຕິບັດກໍຄືປະຊາຊົນອາດຕັດສິນໃຈດໍາເນີນການສ້າງແຜນຍຸດທະສາດໂຄສະນາປຸກລະດົມໂດຍໃຫ້ແທດເໝາະກັບສະພາບການ ແລະ ຜົນປະໂຫຍດຂອງຊຸມຊົນ ແຜນຍຸດທະສາດນີ້ອາດແມ່ນການຕໍ່ຕ້ານແບບສະຫງົບ ແລະ ການປູກຈິດສໍານຶກໂດຍອາໄສສື່ຂອງທ້ອງຖິ່ນ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ. ໃນນັ້ນບາງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຈໍານວນໜຶ່ງກໍ່ໄດ້ສ້າງສື່ໂຄສະນາທີ່ມີປະໂຫຍດໄວ້ຢ່າງຫຼວງຫຼາຍແລ້ວ.

### ແຫຼ່ງຂໍ້ມູນສໍາຄັນ (Key Resources)

- ຖະແຫຼງການອົງການສະຫະປະສາຊາດ ວ່າດ້ວຍສິດທິຂອງປະຊາຊົນບັນດາເຜົ່າ (UNDRIP)
  http://www.un.org/esa/socdev/npfii/en/declaration.html
- ສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່າ: ບົດບາດຂອງບໍລິສັດຂຸດຄົ້ນແຮ່, ອົງການອັອກ ສະຟາມແຫ່ງປະເທດອົດສະຕຼາລີ, 2007
  http://www.oxfam.org.au/campaigns/mining/docs/FPIC_statement.pdf
- ການກະຈາຍພື້ນທີ່ (Breaking Ground): ໂຄງການພັດທະນາຊຸມຊົນດ້ານການກັ່ນຕອງ ແລະ ພື້ນຖານໂຄງລ່າງ; ສະຖາບັນຊັບພະຍາກອນໂລກ, 2009
  http://www.wri.org/publication/breakinggroundengagingcommunities
- ອິດສະຫຼະ ແລະ ຄວາມສະເໝີພາບຕໍ່ການເຄົາລົບສິດທິມະນຸດຂອງປະຊາຊົນບັນດາເຜົ່າປະເທດອົດສະຕຼາລີ: ຄູ່ມືການໂຄສະນາສະໜັບສະໜູນຊຸມຊົນ, ອົງການອັອກສະຟາມແຫ່ງປະເທດອົດສະຕຼາລີ ແລະໂຄງການຝຶກອົບຮົມດ້ານການທູດ, 2009
  http://www.dtp.unsw.edu.au/documents/FreeanEqual FALR 003.pdf
- ເຂື່ອນໄຟຟ້ານໍ້າຕົກ, ແມ່ນໍ້າ ແລະ ສິດທິ: ຄູ່ມືການປະຕິບັດງານດ້ານຜົນກະທົບຈາກເຂື່ອນໄຟຟ້າ, ອົງການປະສານງານແມ່ນໍ້າໂລກ, 2006 (ສາມາດເຂົ້າເບິ່ງໄດ້ໃນເວັບໄຊທີ່ພິມເປັນ 10 ພາສາ)
  http://www.internationalrivers.org/en/node/579/
- ຄູ່ມືການໂຄສະນາອົງການນິລະໂທສະກໍາສາກົນ, 1997
  http://www.amnesty.org/en/library/info/ACT10/002/1997
- ຄູ່ມື ແລະ ອຸປະກອນໂຄສະນາສະໜັບສະໜູນຂອງອົງການແຄຣ໌: ສະໜັບສະໜູນການປ່ຽນແປງນະໂຍບາຍ, 2001.
  http://www.care.org/getinvolved/advocacy/tools/english_00.pdf
- ຄູ່ມືການໂຄສະນາປຸກລະດົມເພື່ອຄວາມຍຸດຕິທໍາທາງສັງຄົມຂອງອົງການ A Global Action and Reflection, 2001
  http://www.oxfamamerica.org/publications/advocacyforsocialjustice

# ອົງການຈັດຕັ້ງ

## ອົງການສະຫະປະຊາຊາດ

- ອົງການສະຫະປະຊາຊາດ: ບົດລາຍງານພິເສດອົງການສະຫະປະຊາຊາດກ່ຽວກັບ ສະພາບການດ້ານສິດທິມະນຸດ ແລະ ພື້ນຖານເສລີພາບຂອງປະຊາຊົນບັນດາເຜົ່າ
  http://www2.ohchr.org/english/issues/indigenous/rapporteur/
- ສະພາຄະນະປະຈຳອົງການສະຫະປະຊາຊາດກ່ຽວກັບບັນຫາປະຊາຊົນບັນດາເຜົ່າ
  http://www.un.org/esa/socdev/unpfii/

## ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດຖະບານ

- ສົນທິສັນຍາອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ກ່ຽວກັບປະຊາຊົນບັນດາເຜົ່າໃນອາຊີ
  http://www.aippnet.org
- ອົງການກາໂຕລິກ ເພື່ອການພັດທະນາຢູ່ຕ່າງປະເທດ (CAFOD)
  http://www.cafod.org.uk
- ໂຄງການຊຸມຊົນເພື່ອການພັດທະນາປ່າໄມ້
  http://www.forestpeoples.org.
- ອົງການແມ່ນ້ຳສາກົນ international Rivers:
  http://www.internationlalrivers.org
- ອົງການອັອກສະຟາມແຫ່ງປະເທດສະຫະລັດອາເມລິກາ Oxfam America:
  http://www. oxfamamerica.org
- ອົງການອັອກສະຟາມແຫ່ງປະເທດອົດສະຕຼາລີ Oxfam Australia:
  http://www.oxfam.org.au

## ອົງການຈັດຕັ້ງຢູ່ໃນພື້ນທີ່ຂອງທ່ານ

- ບັນດາອົງການຈັດຕັ້ງປະເທດຕ່າງໆ
- ອົງການຈັດຕັ້ງຊຸມຊົນໃນປະເທດຕ່າງໆ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານຂັ້ນທ້ອງຖິ່ນ.
- ສະພາອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ຫຼື UMBRELLA GROUP ໃນປະເທດຕ່າງໆ.
- ອົງການຈັດຕັ້ງເພື່ອໃຫ້ຄຳປຶກສາດ້ານກົດໝາຍສຳລັບຊຸມຊົນທ້ອງຖິ່ນ
- ອຳນາດການປົກຄອງທ້ອງຖິ່ນ (ເຊັ່ນ ອົງການປົກປ້ອງສິ່ງແວດລ້ອມ ຫຼື ພະແນກສິ່ງແວດລ້ອມ) ຊັບພະຍາກອນທຳມະຊາດ.

# ເອກະສານຊ້ອນທ້າຍ 1:

ບັນດາປະເທດທີ່ໃຫ້ການສະໜັບສະໜູນຖະແຫຼງການອົງການສະຫະປະຊາຊາດວ່າດ້ວຍສິດທິປະຊາຊົນບັນດາເຜົ່າ.

ຖະແຫຼງການອົງການສະຫະປະຊາຊາດວ່າດ້ວຍສິດທິຂອງປະຊາຊົນບັນດາເຜົ່າແມ່ນຖະແຫຼງການໃນກົດໝາຍສາກົນໝາຍຄວາມວ່າ ມັນບໍ່ແມ່ນເອກະສານທີ່ຜູກພັນທາງດ້ານກົດໝາຍຢູ່ໃນປະເທດຕ່າງໆນັ້ນແຕ່ຢ່າງໃດ. ຄວາມສຳຄັນຂອງເອກະສານສະບັບນີ້ແມ່ນມັນໄດ້ກຳນົດມາຕະຖານຕ່າງໆທີ່ໄດ້ຮັບ ຈາກອົງການຈັດຕັ້ງສາກົນ ແລະ ລັດຖະບານຂອງປະເທດຕ່າງໆທົ່ວໂລກ.

ຖ້າປະເທດໃດຫາກໄດ້ໃຫ້ການສະໜັບສະໜູນຖະແຫຼງການດັ່ງກ່າວນີ້, ລັດຖະບານຂອງປະເທດນັ້ນກໍຈະມີຄວາມຮັບຜິດຊອບຕໍ່ການປົກປ້ອງການປະຕິບັດສິດເຫຼົ່ານັ້ນ.

ຕາຕະລາງໃນໜ້າ10 ສະແດງໃຫ້ເຫັນຄວາມສຳຄັນ ຂອງຖະແຫຼງການໃນການປົກປ້ອງສິດຕ່າງໆຂອງປະຊາຊົນບັນດາເຜົ່າ ແລະ ການປະກອບ ສ່ວນເຂົ້າໃນການພັດທະນາທີ່ຍືນຍົງ.

## ປະເທດທີ່ໃຫ້ການສະໜັບສະໜູນຖະແຫຼງການນີ້ມີທັງໝົດ147ປະເທດ

ປະເທດອັບການິດສະຖານ,ອານບານີ,ອານເຊຣີ, ອັງໂດຣາ, ອັງໂກລາ, ອັງຕີກວາ ແລະ ບາຕູດາ, ອັກຊັງຕິນ, ອັກເມນນີ, ອົດສະຕຼາລີ, ຍາຣາດສ໌, ບາເຣນ, ບັກກາໂດດສ໌, ບາລາຣຸດສ໌, ເບນຊິກ. ເບລີເຊ, ເບແນງ, ໂບລີວີ, ໂບດສະເນຍ ແລະ ເຮີແຊໂກວີນາ, ໂບດສະວານາ, ບຣາຊິນ, ບຣູໄນ, ດາຣູຊາລາມ, ບູນກາລີ, ເບີກີນາ, ຟາໂຊ, ກຳປູເຈຍ, ກາເມຣູນ, ກາເປ ແວັກເດ, ສາທາລະນະລັດອັດຟຣິກກາກາງ, ຈີເລ, ຈີນ, ໂກລຳບີ, ໂກມໂມຣົດສ໌, ກົງໂກ, ໂກດສະຕາຣິກາ, ໂຄຣເອເຊຍ, ກູບາ, ໄຊປັຣດສ໌, ສາທາລະນະລັດເຊັກ, ສາທາລະນະລັດປະຊາທິປະໄຕ ປະຊາຊົນ ເກົາຫຼີ, ສາທາລະນະລັດ ປະຊາທິປະໄຕກົງໂກ, ເດັນມາກ,ຈີບູຕີ, ໂດມີນິກາ, ສາທາລະ ນະລັດ ໂດມີນິກາ, ເອກວາດໍ, ເອຢິບ, ແອນຊາວາດໍ, ແອດສະໂຕນີ, ແຟງລັງ, ຝຣັ່ງເສດ, ກາບອນ, ເຍຍລະມັນ, ການາ, ເກຣັກ, ກວາເຕມາລາ, ກີເນ, ກູຢານາ, ໄຮຕິ, ຮົງດູຣັດສ໌, ຮົງກາຣີ, ໄອສະແລນ, ອິນເດຍ, ອິນໂດເນເຊຍ, ອີຣານ, ອີຣັກ, ໄອແລນ, ອີຕາລີ, ຈາໄມກາ, ຍີ່ປຸ່ນ, ຈໍແດນ, ກາຊັກສະຖານ, ກູເວດ, ສາທາລະ ນະລັດ ປະຊາທິປະໄຕປະຊາຊົນລາວ, ລັດວີ, ເລບານອນ, ເລໂຊໂທ, ລີເບີຣີ, ລີບັງ, ອາຣັບຈາມາຮີຣິຢາ, ເລເຊັນເຕັນ, ລິດທົວນີ, ລຸກຊຳບວກ, ມາດາກັດສະກາ, ມາລາວີ, ມາເລເຊັຍ, ມານດີບ, ມາລີ, ມານຕາ, ໂມຣີຕີອຸດ, ແມັກຊີໂກ, ສະຫະພັນລັດມິກ ໂກເນເຊຍ, ໂມນດາວາ, ໂມນາໂກ. ມົງໂກລີ, ໂມຊຳບິກ, ມຽນມາ, ນາມີບີ, ເນປານ, ເນເທີແລນ, ນິວຊີແລນ, ນິກາຣາກວາ, ນີຊີຣີ, ນອກເວ, ໂອມານ, ປາກີດສະຖານ, ປານາມາ, ບາຣາກວາຍ, ເປຣູ, ຟີລິບປິນ, ໂປໂລຍ, ປອກຕຸຍການ, ກາຕາ, ສາທາລະນະລັດ ເກົາຫຼີ, ແຊນລູເຊຍ, ແຂນແວງຊັງ ແລະ ເກີຣນາດີ, ຊາໂມອາ, ຊັງ ມາຣີໂນ, ຊາອຸດີ ອາຣັບບີ, ເຊເນການ, ແຊກບີ, ເຊຣາຣີໂອນ, ສິງກະໂປ, ສະໂລວາກີ, ສະໂລເວນີ, ອາຟຣິກກາໃຕ້, ແອດສະປາຍ, ສີລັງກາ, ຊູດານ, ຊູຣິນາມ, ຊະວາຊແລນ, ສະວີເດັນ, ສະວິດ, ສາທາລະນະລັດ ອາຣັບຊີລີ, ຕານຊານີ, ໄທ, ອະດີດ ສາທາລະນະລັດ ຢູໂກສະລາວີມາເຊໂດນີ, ຕີມໍເລດສ໌, ຕຣີນີດາດ ແລະ ຕາບາໂກ, ຕຸຍນີຊີ, ຕວກກີ, ສາທາລະນະລັດອາຣັບອາເມຣິດ, ສະຫະຣາຊະອະນາຈັກອັງກິດ, ອູຣຸກວາຍ, ເວເນຊູແອນລາ, ວຽດນາມ, ເຢແມນ, ຊຳບີ ແລະ ຊິມບັບເວ.

ແຫຼ່ງຂໍ້ມູນ: http://www.un.org/esa/socdev/unpfii/en/declaration.html

# ເອກະສານຊ້ອນທ້າຍ 2:

**ຂອບແຜນງານສໍາລັບການວິໄຈກົດໝາຍຂັ້ນທ້ອງຖິ່ນກ່ຽວກັບອິດສະຫຼະ, ຄວາມພ້ອມ ແລະ ຄວາມເຫັນດີເຫັນພ້ອມ.**

ຄໍາຖາມຕໍ່ໄປນີ້ໄດ້ຮັບການອອກແບບຂຶ້ນມາ ເພື່ອຊ່ວຍໃຫ້ມີຄວາມເຂົ້າໃຈວ່າສິດທິຂອງປະຊາຊົນຕາມຫຼັກການກ່ຽວກັບສິດ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່າໄດ້ຮັບການປົກປ້ອງຢູ່ໃນກົດໝາຍແຫ່ງຊາດຂອງປະເທດນັ້ນໆບໍ່?

1. ປະເທດຂອງທ່ານໄດ້ສະໜັບສະໜູນຖະແຫຼງການອົງການສະຫະປະຊາຊາດວ່າດວຍສິດທິຂອງປະຊາຊົນບັນດາເຜົ່າບໍ່? ຈົ່ງກວດເບິ່ງຕາຕະລາງຢູ່ໜ້າ 30 ເພື່ອເບິ່ງວ່າປະເທດຂອງທ່ານມີຊື່ຢູ່ໃນບັນຊີປະເທດທີ່ສະໜັບສະໜູນຖະແຫຼງການອົງການສະຫະປະຊາຊາດວ່າດ້ວຍສິດທິຂອງປະຊາຊົນບັນດາເຜົ່າ ຫຼື ບໍ່? ຖ້າບໍ່ມີໃຫ້ກວດເບິ່ງຢູ່ເວັບໄຊຂອງອົງການສະຫະປະຊາຊາດ: http://www.un.org/esa/socdev/unpfii/
2. ໃຫ້ກວດເບິ່ງວ່າກົດໝາຍແຫ່ງຊາດຂອງປະເທດນັ້ນທີ່ໄດ້ໃຫ້ການສະໜັບສະໜູນຖະແຫຼງການອົງການສະຫະປະຊາຊາດວ່າດ້ວຍສິດທິຂອງປະຊາຊົນ ບັນດາເຜົ່າ ຫຼື ບໍ່? **ຖ້າວ່າມີ**, ກົດໝາຍນັ້ນໄດ້ບັນຍັດຂໍ້ຄວາມຫຍັງໄວ້ແດ່? ໃຫ້ເບິ່ງລາຍລະອຽດໃນກົດໝາຍວ່າຄວາມຕ້ອງການພາຍໃຕ້ກົດໝາຍນັ້ນແມ່ນຫຍັງ? ປະຊາຊົນຈະຮ້ອງຮຽນເພື່ອປະຕິບັດກົດໝາຍນີ້ໄປຫາໃຜ? ໃຫ້ກວດເບິ່ງວ່າກົດໝາຍນັ້ນສາມາດນໍາໃຊ້ສໍາລັບທຸກຊຸມຊົນທີ່ໄດ້ຮັບຜົນກະທົບ ຈາກໂຄງການບໍ່? ຫຼື ວ່າກົດໝາຍນັ້ນຄຸ້ມຄອງສະເພາະສິດຂອງປະຊາຊົນທີ່ເປັນຄົນໃນທ້ອງຖິ່ນເທົ່ານັ້ນ. ຂະບວນການໃນການປະຕິບັດກົດໝາຍນັ້ນມີຫຍັງແດ່? ຈົ່ງສົມທຽບກົດໝາຍແຫ່ງຊາດຂອງຕົນກັບມາດຕາ 32 ຂອງຖະແຫຼງການອົງການສະຫະປະຊາຊາດວ່າດ້ວຍສິດທິຂອງປະຊາຊົນບັນດາເຜົ່າເພື່ອ ເບິ່ງວ່າໃນກົດໝາຍແຫ່ງຊາດຂອງ ຕົນນັ້ນໄດ້ກວມເອົາທຸກໆດ້ານຂອງສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງຊຸມຊົນບໍ່? ໃຫ້ເບິ່ງລົງເລິກວ່າຂະບວນການຕ່າງໆທີ່ກົດໝາຍນັ້ນກໍານົດໄວ້ມີຫຍັງແດ່?**ຖ້າໄດ້ຮັບຄໍາຕອບວ່າ "ບໍ່ມີ"** ກໍ່ໃຫ້ສືບຕໍ່ຄົ້ນຄວ້າເບິ່ງໃນຄໍາຖາມຕໍ່ໄປນີ້ວ່າ: ມີກົດໝາຍໃດແດ່ໃນກົດໝາຍແຫ່ງຊາດຂອງປະເທດນັ້ນທີ່ບັນຍັດເນື້ອຄວາມໄວ້ຄ້າຍຄືຫຼັກການກ່ຽວກັບສິດ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່າ. ສິ່ງນີ້ຄວນຈະມີຢູ່ໃນກົດໝາຍທີ່ກ່ຽວຂ້ອງກັບການພັດທະນາໂຄງລ່າງພື້ນຖານ ຕົວຢ່າງ: ແຜນການທີ່ຖືກຮັບຮອງທາງດ້ານກົດໝາຍ.ຂະບວນການຕ່າງໆທີ່ຕ້ອງການພາຍໃຕ້ກົດໝາຍມີຫຍັງແດ່?ໃຫ້ເບິ່ງລົງເລິກລະອຽດຢູ່ທີ່ຂະບວນການຕ່າງໆທີ່ກົດໝາຍບັນຍັດໄວ້ສິດ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງຊຸມຊົນ ດ້ານໃດແດ່ທີ່ໄດ້ກໍານົດໄວ້ໃນກົດໝາຍຕົວຢ່າງຕ່າງໆທີ່ຄວນມີໃນກົດໝາຍ ຄື: ຂະບວນການໃຫ້ຄໍາປຶກສາຫາລືແກ່ຊຸມຊົນ, ຄວາມຕ້ອງການໃນການວາງແຜນ, ຄວາມຕ້ອງການໃນການປະເມີນຜົນກະທົບດ້ານສັງຄົມ ແລະ ສິ່ງແວດລ້ອມ.
3. ຢູ່ປະເທດນັ້ນໆມີກໍລະນີທາງກົດໝາຍທີ່ສະໜັບສະໜູນຫຼັກການກ່ຽວກັບສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງຊຸມຊົນ. **ຖ້າວ່າມີ**: ສານໄດ້ຕັດສິນເລື່ອງໃດແດ່? ຈົ່ງເບິ່ງໃນກໍລະນີຊຸມຊົນທີ່ໄດ້ຮັບຜົນກະທົບທີ່ຮຽກຮ້ອງສິດທິຂອງເຂົາເຈົ້າໃນດ້ານສິດ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່າໃນພາກໃດພາກໜຶ່ງເຊັ່ນ: ການຂຸດຄົ້ນແຮ່, ການສ້າງເຂື່ອນໄຟຟ້ານໍ້າຕົກ, ການຂຸດຄົ້ນໄມ້,ໃຫ້ເບິ່ງລະອຽດວ່າສານໄດ້ຕັດສິນໂດຍຜ່ານການອ່ານຄໍາພິພາກສາຂອງສານຢ່າງເປັນທາງການ. ກໍລະນີນີ້ສາມາດນໍາໃຊ້ກັບກໍລະນີຂອງປະຊາຊົນຄົນອື່ນໆໄດ້ບໍ່? ໃຫ້ເບິ່ງສະຖານະການຂອງກໍລະນີທີ່ມີຄວາມຄ້າຍຄືກັນລະຫວ່າງປະຊາຊົນຜູ້ໜຶ່ງກັບອີກຜູ້ໜຶ່ງ.ຈົ່ງອ່ານສິ່ງທີ່ສານພິພາກສາແລ້ວເບິ່ງວ່າເຫດຜົນທີ່ມີຄວາມຄ້າຍຄືກັນສາມາດນໍາໄປໃຊ້ກັບສະຖານະການອື່ນໄດ້ບໍ່?ຖ້າຄໍາຕອບວ່າບໍ່ໄດ້: ໃຫ້ຖາມຕໍ່ໄປວ່າ: ຢູ່ປະເທດຂອງປະຊາຊົນທີ່ກ່ຽວຂ້ອງໄດ້ມີກໍລະນີສຶກສາລັກສະນະນີ້ບໍ່? ຖ້າວ່າບໍ່ມີກໍລະນີໃດຮ້ອງຟ້ອງຂຶ້ນເຖິງສານ, ກໍໃຫ້ວິໄຈເບິ່ງວ່າມີຊຸມຊົນອື່ນໆແດ່ບໍທີ່ໄດ້ຮັບຜົນກະທົບຈາກໂຄງການພັດທະນາຕ່າງໆ. ພວກເຂົາເຈົ້າໄດ້ມີການກະທໍາອັນໃດແດ່? ນອກຈາກນີ້ກໍ່ອາດຍັງມີກໍລະນີສຶກສາເຊິ່ງອາດຈະຊ່ວຍປົກປ້ອງສິດຂອງປະຊາຊົນໄດ້. ມີອົງການຈັດຕັ້ງຊຸມຊົນທ້ອງຖິ່ນທີໄດ້ປະຕິບັດໜ້າທີ່ຕໍ່ຕ້ານໂຄງການພັດທະນາໃນປະເທດນັ້ນໆ. ຂໍໃຫ້ກວດເບິ່ງວ່າອົງການຈັດຕັ້ງຕ່າງໆໃນຂົງເຂດນັ້ນໆມີຂໍ້ມູນຂ່າວສານເພື່ອເຂົ້າເຖິງຄວາມຊ່ວຍເຫຼືອຂອງຂະບວນການຫວງສິດທິ ແລະ ຄວາມເປັນອິດສະຫຼະໃນຂະບວນການຕັດສິນໃຈຂອງປະຊາຊົນບັນດາເຜົ່າ.

# ເອກະສານຊ້ອນທ້າຍທີ 3:

## ວົງຈອນຂອງໂຄງການ

ໂຄງການບໍ່ຄືກັນທັງໝົດ. ເຖິງຢ່າງໃດກໍຕາມ, ບັນດາໂຄງການຂະໜາດໃຫຍ່ອາດມີໄລຍະການປະຕິບັດວຽກງານຂອງຕົນດັ່ງຕໍ່ໄປນີ້: ແຜນວາດອັນນີ້ແມ່ນພາບລວມຂອງວົງຈອນຂອງໂຄງການ. ແຜນວາດນີ້ຈະຊ່ວຍໃຫ້ເຂົ້າໃຈຂະບວນການທີ່ມີຂໍ້ຜູກພັນກັບເຈົ້າຂອງໂຄງການ.

| ວົງຈອນຂອງໂຄງການ | ກິດຈະການຕ່າງໆມີດັ່ງນີ້: ໂຄງຮ່າງລວມຊີ້ໃຫ້ເຫັນວ່າມີຫຍັງຈະເກີດຂຶ້ນໃນແຕ່ລະຂັ້ນຕອນຂອງການປະຕິບັດໂຄງການພັດທະນາຂະໜາດໃຫຍ່. | ກິດຈະກຳໃນພາກປະຕິບັດເພື່ອໃຫ້ຊຸມຊົນໄດ້ເຂົ້າຮ່ວມໃນໂຄງການມີດັ່ງນີ້: ເຈົ້າຂອງໂຄງການຈະຕ້ອງເຮັດຫຍັງເພື່ອໃຫ້ມີຄວາມໝັ້ນໃຈວ່າຊຸມຊົນໄດ້ເຂົ້າຮ່ວມໃນທຸກໆຂັ້ນຕອນຂອງໂຄງການ. |
|---|---|---|
| ກຳນົດແນວຄວາມຄິດໂຄງການ | - ການກຳນົດໂອກາດຕ່າງໆຂອງໂຄງການ.<br>- ການໄດ້ຮັບຄຳອະນຸມັດຈາກລັດຖະບານທ້ອງຖິ່ນ.<br>- ສຳຫຼວດແຮ່ທາດຕ່າງໆ, ສຳຫຼວດກ່ຽວກັບການກໍ່ສ້າງເຂື່ອນໄຟຟ້າ. | - ການຮັບໃຊ້ຊຸມຊົນ, ການເປີດເຜີຍ, ການໃຫ້ຄຳປຶກສາໃນຂັ້ນຕົ້ນ.<br>- ການວິເຄາະຄວາມສ່ຽງຂອງໂຄງການນັບທັງບັນຫາຂອງຜູ້ຮ່ວມໂຄງການ.<br>- ສຳລັບໂຄງການທີ່ມີຄວາມສະຫຼັບສັບຊ້ອນຕ້ອງສ້າງຕັ້ງສະພາການວາງແຜນຂອງຜູ້ຮ່ວມໂຄງການ. |
| ການອຳນວຍຄວາມສະດວກໃນການສຶກສາ ແລະ ວາງແຜນໂຄງການ | - ເຈົ້າຂອງໂຄງການວາງແຜນໂຄງການ.<br>- ດຳເນີນການປະເມີນຜົນກະທົບດ້ານສັງຄົມ ແລະ ສິ່ງແວດລ້ອມ. | - ດຳເນີນການປະເມີນດ້ານສິດທິມະນຸດ.<br>- ການປະເມີນຜົນກະທົບດ້ານສັງຄົມ ແລະ ສິ່ງແວດລ້ອມທີ່ປະກອບດ້ວຍແຜນການບັນເທົາທຸກ.<br>- ການເຈລະຈາຂໍ້ຕົກລົງດ້ານຜົນປະໂຫຍດຈາກຜົນກະທົບກັບຊຸມຊົນ.<br>- ອອກແບບຂະບວນການແກ້ໄຂຂໍ້ຂັດແຍ່ງກັບຊຸມຊົນ. |
| ການດຳເນີນການກໍ່ສ້າງໂຄງການ | - ເຈົ້າຂອງໂຄງການລົງມືກໍ່ສ້າງສິ່ງອຳນວຍຄວາມສະດວກ, ນັບທັງໜ້າວຽກລຸ່ມນີ້:<br>- ການຈັດຊື້ທີ່ດິນ, ຈັດສັນທີ່ດິນ, ການຕັ້ງຖິ່ນຖານຄືນໃໝ່ໃຫ້ຊຸມຊົນ ແລະ ອື່ນໆ. | - ແຈ້ງການໃຫ້ຊຸມຊົນຮັບຊາບກ່ຽວກັບການກໍ່ສ້າງ ແລະ ໃຫ້ຄຳແນະນຳກ່ຽວກັບການປ່ຽນແປງຕ່າງໆ<br>- ວິທີການແກ້ໄຂຂໍ້ຂັດແຍ່ງໃນພາກສະໜາມ.<br>- ແຈ້ງການໃຫ້ຊຸມຊົນຮັບຊາບກ່ຽວກັບແຜນການແກ້ໄຂ ແລະ ຫຼຸດຜ່ອນຜົນກະທົບດ້ານສັງຄົມ ແລະ ສິ່ງແວດລ້ອມ. |
| ການດຳເນີນການໂຄງການ | - ການເຊື່ອມໂຍງວຽກງານຈາກຂັ້ນຕອນການກໍ່ສ້າງໄປສູ່ຂັ້ນຕອນການປະຕິບັດໂຄງການຈິງ.<br>- ເລີ່ມລົງມືນຳໃຊ້ລະບົບບໍລິຫານການປະຕິບັດວຽກງານ. | - ສືບຕໍ່ເປີດເຜີຍ, ໃຫ້ຄຳປຶກສາຫາລື ແລະ ລາຍງານຜົນກະທົບຂອງໂຄງການໃຫ້ຊຸມຊົນຮັບຊາບ.<br>- ປ້ອງກັນອຸປະຕິເຫດ ແລະພາວາຄວາມເປັນພິດທີ່ສອດຄ່ອງກັບແຜນການຄຸ້ມຄອງສັງຄົມ ແລະ ສິ່ງແວດລ້ອມ.<br>- ດຳເນີນການແກ້ໄຂຂໍ້ຂັດແຍ່ງຂອງຊຸມຊົນຢ່າງຕໍ່ເນື່ອງ. |
| ການກຽມພ້ອມສຳລັບການປ່ຽນທ່າຍຄະນະກຳມະການໂຄງການ | - ການສຳເລັດໂຄງການ.<br>- ເຈົ້າຂອງໂຄງການສະຫຼຸບໂຄງການ ແລະ ປິດໂຄງການ. | - ຄະນະກຳມະການໂຄງການທີ່ໝົດວາລະໄປແລ້ວນັ້ນຕ້ອງສ້າງແຜນຄວາມຕ້ອງການເພື່ອທົບທວນ ແລະ ປັບປຸງຄືນ, ຜູ້ຮ່ວມໂຄງການອາດມີການປ່ຽນແປງລາຍການຂອງໂຄງການ.<br>- ສ້າງແຜນການ ແລະ ດຳເນີນການໃຫ້ຄຳປຶກສາຫາລືສຳລັບຊຸມຊົນ (ຄືກັນກັບຂັ້ນຕອນສຳຫຼວດຄວາມເປັນໄປໄດ້ເບື້ອງຕົ້ນ).<br>- ໃນແຜນການນັ້ນຄວນມີພາກຂອງການປະເມີນຜົນກະທົບດ້ານສັງຄົມ ແລະ ສິ່ງແວດລ້ອມ. |



ບ່ອນວ່າງສຳລັບກາປະທັບຂອງອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ.



OXFAM